# ສັນຕິສຸກ

"...ຢ່າວຸ້ນວາຍເປັນທຸກ
ແລະຢ່າສູ້ຢ້ານ..."

ໂຢຮັນ14:27



ຈອຍຊ໌ ໄມເອີຣ໌

# ສັນຕິສຸກ

"...ຢ່າວຸ້ນວາຍເປັນທຸກ ແລະຢ່າສູ່ຢ້ານ..."

*ໂຢຮັນ14:27*

# Peace (Laos)

Joyce Meyer

First Printing: June 2013

Contact Information: Joyce Meyer Ministries

Email: jmm2m@outlook.com

# ສາລະບານ


ຄໍານໍາ 5

1. ທ່ານມີຄວາມຊື່ນຊົມ(ມັກ)ໃນສັນຕິສຸກຫຼືບໍ່ ? 7
2. ຈະມີຄວາມຊື່ນຊົມ(ມັກ)ໃນສັນຕິສຸກໄດ້ແນວໃດ ? 10
3. ໃຫ້ສັນຕິສຸກນໍາພາ 14
4. ໃຜຈະລັກເອົາສັນຕິສຸກຂອງທ່ານ 17
5. ເປັນຫຍັງມານຈຶ່ງພະຍາຍາມລັກສັນຕິສຸກຂອງທ່ານໄປ 20
6. ທີ່ຕັ້ງໝັ້ນຂອງຜູ້ເຊື່ອຂະນະທີ່ຖືກທົດລອງ 26
7. ມື້ລະກ້າວ 31
8. ການອະທິຖານນໍາສັນຕິສຸກມາໃຫ້ 36

# ຄຳນຳ

ມຸ່ງຍາດແຍ່ງເອົາສັນຕິສຸກ (ຄວາມປອງດອງ, ຄວາມສາມັກຄີ ຢ່າງບໍ່ຫວັ່ນໄຫວຄອນແຄນ ດ້ວຍຄວາມຢ້ານບໍ່ລະປັກແຫ່ງຕັນຫາຜິດສິນທຳ) ແລະມຸ່ງສະແຫວງຫາສັນຕິສຸກ ດ້ວຍຄວາມຮ້ອນຮົນ ບໍ່ແມ່ນພຽງແຕ່ມີຄວາມປາຖະໜາ, ຄວາມທະເຍີທະຍານ ຫຼືມັກໃຫຍ່ໃຝ່ສູງໃນສາດສະໜາ ກັບພຣະເຈົ້າ, ກັບຄົນອ້ອມຂ້າງ ຫຼືແມ່ນແຕ່ກັບຕົນເອງ ແຕ່ມຸ່ງຍາດແຍ່ງເພື່ອຈະໄດ້ສັນຕິສຸກມາ .

1ເປໂຕ 3:11

ຂ້າພະເຈົ້າປາຖະໜາວ່າປື້ມສັນຕິສຸກເຫຼັ້ມນີ້ ຈະຊ່ວຍໃຫ້ທ່ານໄດ້ຮຽນຮູ້ທີ່ຈະຊ່ວຍໃຫ້ທ່ານໄດ້ຮຽນຮູ້ທີ່ຈະມັກໃນສັນຕິສຸກແຫ່ງພຣະເຈົ້າ ຊຶ່ງເກີນຄວາມເຂົ້າໃຈ ...

ຟີລິບປອຍ 4:7

## ທ່ານມີຄວາມຊື່ນຊົມ(ມັກ)ໃນສັນຕິສຸກຫຼືບໍ່?

ຜູ້ບັງເກີດໃໝ່ເປັນລູກຂອງພຣະເຈົ້າທຸກຄົນຄວນຈະມັກຊີວິດແຫ່ງສັນຕິສຸກ ພຣະເຢຊູເຄີຍກ່າວໄວ້ ໃນ ໂຢຮັນ 14 :27 ວ່າ :

**"ເຮົາມອບສັນຕິສຸກໄວ້ກັບພວກເຈົ້າ ເປັນສັນຕິສຸກຂອງເຮົາ ທີ່ເຮົາມອບໃຫ້ພວກເຈົ້າ ສັນຕິສຸກທີ່ເຮົາມອບໃຫ້ນັ້ນ ບໍ່ເໝືອນສັນຕິສຸກທີ່ໂລກໃຫ້ ຢ່າວຸ້ນວາຍເປັນທຸກໃຈແລະຢ່າສູ່ຢ້ານ** ຢຸດທີ່ຈະອະນຸຍາດໃຫ້ຕົວຂອງທ່ານ ຕ້ອງຕົກຢູ່ໃນສະພາບຂອງຄວາມວິຕົກແລະຄວາມວຸ້ນວາຍໃຈ ຢ່າໃຫ້ໂອກາດແກ່ຕົວທ່ານ ທີ່ຈະມີຄວາມຢ້ານກົວ, ຫວັ່ນໄຫວ, ບໍ່ໝັ້ນຄົງ ພຣະຄຳຂອງພຣະເຈົ້າຂໍ້ນີ້ນັບວ່າຊົງມີພະລັງຫຼາຍ ກະລຸນາອ່ານຊ້ຳ 2 - 3 ຄັ້ງ ແລ້ວໃຊ້ເວລາຢ່າງໜ້ອຍ 5 ນາທີ ເພື່ອຕຶກຕອງແລະໃຫ້ພຣະຄຳຂໍ້ນີ້ຊຶມຊັບລົງໄປພາຍໃນທ່ານ.

ຂໍ້ທຳອິດທີ່ໃຫ້ສັງເກດຄື : ສັນຕິສຸກທີ່ພຣະເຢຊູໄດ້ຊົງປະທານໃຫ້ນັ້ນ ເປັນສັນຕິສຸກທີ່ບໍ່ຄືກັບທີ່ໂລກໃຫ້ ແລ້ວແມ່ນຫຍັງແດ່ຄືສັນຕິສຸກທີ່ໂລກນີ້ໄດ້ໃຫ້? ໂລກໄດ້ໃຫ້ພຽງແຕ່ ພາບເງົາຂອງຄວາມຮູ້ສຶກໃນສັນຕິສຸກຢ່າງຊົ່ວຄາວເທົ່ານັ້ນ ເຊິ່ງຈະມີກໍ່ຕໍ່ເມື່ອທຸກຢ່າງເປັນໄປໃນທາງທີ່ທ່ານຕ້ອງການ ເມື່ອສິ່ງຕ່າງໆບໍ່ເປັນໄປຕາມທີ່ຕ້ອງການໃນຊີວິດຂອງທ່ານ ສັນຕິສຸກປະເພດນີ້ກໍ່ຈະສາບສູນໄປຈາກທ່ານທັນທີແລະວິນຍານຂອງຄວາມຜິດຫວັງ ກໍ່ຈະເຂົ້າ

ມາຄອບງຳທ່ານທັນທີທັນໃດ ສັນຕິສຸກທີ່ພຣະເຢຊູປະທານໃຫ້ບໍ່ເປັນແນວນັ້ນ ຄືສາມາດທີ່ຈະດຳລົງຢູ່ໄດ້ໃນທຸກສະຖານະການ ບໍ່ວ່າໃນຂະນະທີ່ທ່ານຕົກຕໍ່າຫຼືຕ້ອງຂາຍໜ້າ ຫຼືພົບມໍລະສຸມແຫ່ງຊີວິດຮ້າຍແຮງ ແຕ່ທ່ານຍັງມີສັນຕິສຸກໄດ້ສະເໝີ ນີ້ແມ່ນສັນຕິສຸກທີ່ພຣະເຢຊູປະທານໃຫ້.

ຄົງຈະເປັນການດີ ທີ່ທຸກຢ່າງເປັນໄປຕາມທີ່ເຮົາຄິດໄວ້ຕະຫຼອດເວລາ ແຕ່ເຮົາສາມາດຮູ້ໄດ້ຈາກປະສົບການຊີວິດຈິງ ວ່າມັນບໍ່ເປັນແນວນັ້ນ ໃນຖານະຜູ້ເຊື່ອຂ້າພະເຈົ້າ ພະຍາຍາມໃຊ້ຄວາມເຊື່ອ ເປັນເວລາເປັນປີທີ່ຈະຈັດການກັບສິ່ງທີ່ຂ້າພະເຈົ້າບໍ່ມັກຫຼືມີຄວາມຮູ້ສຶກບໍ່ດີໃຫ້ອອກໄປຈາກຊີວິດ ນີ້ແມ່ນຄວາມໝົດຫວັງຫຼາຍທີ່ຂ້າພະເຈົ້າພະຍາຍາມເຮັດໃຫ້ສິ່ງຕ່າງໆ ເກີດຂຶ້ນຕາມທີ່ຕ້ອງການແຕ່ພັດບໍ່ເປັນຕາມນັ້ນ ບາງເທື່ອກໍ່ເຮັດໃຫ້ຂ້າພະເຈົ້າທໍ້ຖອຍໃຈຫຼາຍ ແຕ່ເມື່ອໄດ້ມີປະສົບການກັບພຣະເຈົ້າຫຼາຍຂຶ້ນແລ້ວໃນທີ່ສຸດຈຶ່ງຮູ້ວ່າຂ້າພະເຈົ້າຈຳເປັນຕ້ອງໃຊ້ຄວາມເຊື່ອ ເພື່ອທີ່ຈະປະເຊີນກັບອຸປະສັກຂັດຂວາງຂອງຊີວິດເຫຼົ່ານັ້ນ ດ້ວຍຄວາມສະຫງົບ, ທຸ່ນທ່ຽງ ແລະບໍ່ເປີດໂອກາດໃຫ້ແກ່ມານ.

ພຣະເຢຊູຄຣິດໄດ້ກ່າວໄວ້ໃນໂຢຮັນ 14 : 27 ວ່າ : ຢ່າວຸ້ນວາຍເປັນທຸກໃຈແລະຢ່າສູ່ຢ້ານ ເມື່ອຂ້າພະເຈົ້າຍິ່ງທຳຄວາມເຂົ້າໃຈ ຂໍ້ພຣະຄຳພີນີ້ຫຼາຍເທົ່າໃດ ກໍ່ຍິ່ງເຮັດໃຫ້ຮູ້ວ່າແທ້ຈິງແລ້ວ

ເປັນໜ້າທີ່ຂອງຂ້າພະເຈົ້າເອງທີ່ຈະຢຸດຄວາມທຸກໃຈ, ຢຸດຄວາມກັງວົນແລະຢຸດຄວາມຢ້ານໃນຊີວິດຂອງ ຂ້າພະເຈົ້າ .

ພຣະເຢຊູໄດ້ຊີງຕຳນິພວກສາວົກຂອງພຣະອົງ ເນື່ອງຈາກພວກເຂົາຂາດສັນຕິສຸກແລະຕົກໃຈຢ້ານກົວ ໃນຍາມທີ່ລົມພະຍຸພັດພວກເຂົາ ແຕ່ພຣະອົງຍັງຄົງມີສັນຕິສຸກແລະນອນຫຼັບຢູ່ທີ່ທ້າຍເຮືອນັ້ນ.

ແລ້ວທ່ານເດ? ທ່ານຈະຢູ່ທີ່ທ້າຍເຮືອແລະຊື່ນຊົມ (ມັກ) ສັນຕິສຸກຮ່ວມກັບພຣະເຢຊູບໍ? ຫາກທ່ານຍັງບໍ່ມີສັນຕິສຸກ ທ່ານກໍ່ຍັງບໍ່ທັນໄດ້ຮັກໃຄ່ກັບຊີວິດທີ່ແທ້ຈິງ.

## "ຈະມີຄວາມຊື່ນຊົມ(ມັກ)ໃນສັນຕິສຸກໄດ້ແນວໃດ?"

ບໍ່ມີປຶ້ມເຫຼັ້ມໃດທີ່ຈະມີປະໂຫຍດໄດ້ ໂດຍປາດສະຈາກການບັນທຶກເຖິງວິທີການປະຕິບັດ ເພື່ອໃຫ້ເກີດຜົນທີ່ດີຕໍ່ສິ່ງທີ່ທ່ານຕ້ອງການຈະເປັນໄດ້ ເຊັ່ນ: ຖ້າທ່ານຕ້ອງການສັນຕິສຸກກໍ່ໜີບໍ່ພົ້ນທີ່ຈະຕ້ອງປະຕິບັດຕາມຂໍ້ແນະນຳຂອງການທີ່ຈະໄດ້ສັນຕິສຸກນັ້ນມາ.

ສິ່ງໜຶ່ງທີ່ຊ່ວຍຂ້າພະເຈົ້າໄດ້ຫຼາຍໃນການທີ່ຈະມັກໃນຊີວິດທີ່ເຕັມໄປດ້ວຍສັນຕິສຸກ ແມ່ນການຄອຍຖ້າເວລາຂອງພຣະເຈົ້າ ເພາະພຣະອົງຊົງມີເວລາຂອງພຣະອົງເອງ ຈະບໍ່ເປັນປະໂຫຍດຫຍັງທີ່ທ່ານພະຍາຍາມເຮັດໃນສິ່ງທີ່ທ່ານເອງເຮັດບໍ່ໄດ້ ທ່ານຕ້ອງການຈະເຮັດແນວນັ້ນບໍ? ທ່ານພົບກັບຄວາມຜິດຫວັງບໍ ເມື່ອທ່ານພະຍາຍາມເຮັດດ້ວຍຄວາມສາມາດຂອງທ່ານເອງ? ພຣະເຈົ້າຊົງມີແຜນການແລະເວລາຂອງພຣະອົງທີ່ເໝາະສົມທຸກຢ່າງຢູ່ແລ້ວ.

ຕາມທຳມະດາແລ້ວທ່ານບໍ່ສາມາດຈະເຮັດສິ່ງຕ່າງໆ ໃຫ້ເກີດຂຶ້ນຜິດລະດູການຂອງມັນໄດ້ ເຖິງວ່າທ່ານເຮັດໄດ້ຈະບໍ່ກໍ່ໃຫ້ເກີດສັນຕິສຸກ ຈົ່ງຮຽນຮູ້ທີ່ຈະຄອຍຖ້າພຣະເຈົ້າ ເພາະວ່າຈະເປັນການຖວາຍກຽດແດ່ພຣະອົງແລະຈະນຳເອົາສັນຕິສຸກມາໃຫ້ທ່ານອີກດ້ວຍ.

ທ່ານກຳລັງພະຍາຍາມເຮັດສິ່ງທີ່ເປັນໄປບໍ່ໄດ້ຫຼືບໍ່? ທ່ານກຳລັງພະຍາຍາມປ່ຽນແປງບຸກຄະລິກຂອງຄົນອ້ອມຂ້າງ, ຄູ່ຮັກຫຼືລູກ ຫຼືຍາດຕິພີ່ນ້ອງຂອງທ່ານບໍ? ມະນຸດບໍ່ສາມາດປ່ຽນແປງມະນຸດໄດ້ ມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະເຂົ້າມາມີບົດບາດໃນໃຈຂອງຄົນເຮົາ ແລ້ວກະທຳໃຫ້ເຂົາເກີດຄວາມປາຖະໜາທີ່ຈະປ່ຽນແປງ ຖ້າເຮົາບັງການດ້ວຍວິທີການຕ່າງໆ ເພື່ອໃຫ້ເກີດການປ່ຽນແປງໄດ້ຢູ່ແຕ່ດ້ານພາຍ ນອກເທົ່ານັ້ນ ສິ່ງນັ້ນກໍ່ຈະຈົບລົງດ້ວຍການຂາດສັນຕິສຸກຂອງທຸກຄົນເທົ່ານັ້ນເອງ ເຮົາບໍ່ໄດ້ຖືກສ້າງຂຶ້ນເພື່ອຢູ່ໃຕ້ການຄອບງຳດ້ວຍກົດບັນຍັດ ແຕ່ມະນຸດເຮົາເກີດມາດ້ວຍຄວາມຕ້ອງການອິດສະຫຼະພາບ.

ຂ້າພະເຈົ້າພະຍາຍາມທີ່ຈະບັງຄັບໃຫ້ ເດຟ ເຊົາຫຼິ້ນກອຟເປັນເວລາຫຼາຍປີໃນຊ່ວງທຳອິດຂອງຊີວິດແຕ່ງງານຂອງພວກເຮົາ ຂ້າພະເຈົ້າຮູ້ສຶກວ່າລາວໃຊ້ເວລາໃນການຫຼິ້ນກອຟຫຼາຍໂພດ ຂ້າພະເຈົ້າພະຍາຍາມໃນທຸກວິທີການເທົ່າທີ່ຕົນສາມາດເຮັດໄດ້ ບໍ່ວ່າຈະດ້ວຍກົນອຸບາຍ, ການສະແດງຄວາມບໍ່ໃຈທາງດ້ານໃບໜ້າ ແລະທ່າທີອອກມາ ຫຼືພະຍາຍາມເຮັດໃຫ້ລາວຮູ້ສຶກສຳນຶກ ຫຼືແມ່ນແຕ່ໃຊ້ຄວາມມິດງຽບບໍ່ປາກໃນການໃຊ້ເປັນເຄື່ອງມືເພື່ອເຈລະຈາຕໍ່ລອງກັບລາວ ແຕ່ທຸກສິ່ງທີ່ຂ້າພະເຈົ້າເຮັດກໍ່ບໍ່ສາມາດປ່ຽນແປງໃຫ້ລາວຢຸດຈາການຫຼິ້ນກອຟໄດ້ເລີຍ ຂ້າພະເຈົ້າຕ້ອງຕົກຢູ່ໃນຄວາມຜິດຫວັງຕະຫຼອດເວລາ ແລະກໍ່ມີເທື່ອໜຶ່ງທີ່ລາວຍອມແພ້

ແລະເຊົາຫຼົ້ນກອຟ ໄດ້ພຽງແຕ່ຊ່ວງໄລຍະໜຶ່ງເທົ່ານັ້ນ ເຊິ່ງສິ່ງທີ່ເປັນຕາຄິດກໍ່ຄືວ່າຂ້າພະເຈົ້າໄດ້ໃນສິ່ງທີ່ຕົນເອງຕ້ອງການແລ້ວ ແຕ່ຂ້າພະເຈົ້າກໍ່ຍັງຄົງບໍ່ມີສັນຕິສຸກຢູ່ ສິ່ງທີ່ເຮັດໃຫ້ຂ້າພະເຈົ້າບໍ່ມີສັນຕິສຸກກໍ່ຄື ການທີ່ຂ້າພະເຈົ້າພະຍາຍາມທີ່ຈະໄດ້ໃນສິ່ງທີ່ຕົນຕ້ອງການດ້ວຍວິທີການທີ່ຜິດ ຖ້າທ່ານກຳລັງພະຍາຍາມທີ່ຈະບັງຄັບແລະຄວບຄຸມຊີວິດຂອງໃຜບາງຄົນ ເພື່ອໃຫ້ເຂົາປ່ຽນແປງຕາມທີ່ທ່ານຕ້ອງການນັ້ນ ສິ່ງນີ້ກໍ່ຈະລັກເອົາສັນຕິສຸກໄປຈາກທ່ານ.

ທ່ານມີຄວາມຜິດຫວັງກັບຕົວທ່ານເອງ ເພາະທ່ານຄິດວ່າທ່ານຍັງບໍ່ທັນມີຊີວິດໃນຝ່າຍວິນຍານຫຼືບໍ່? ທ່ານກຳລັງພະຍາຍາມທີ່ຈະປ່ຽນແປງຕົວເອງຢູ່ແມ່ນບໍ່? ທ່ານຈະຕ້ອງຮ່ວມມືກັບພຣະວິນຍານບໍລິສຸດເພື່ອ ພຣະອົງຈະເຮັດວຽກໃນຊີວິດຂອງທ່ານ ພຣະອົງຈະຊົງນຳພາຊີວິດຂອງທ່ານໄປສູ່ຄວາມສົມບູນ ແລະເປັນຜູ້ໃຫຍ່ໃນພຣະຄຣິດ ທ່ານບໍ່ສາມາດເຮັດສິ່ງເຫຼົ່ານີ້ໄດ້ດ້ວຍຕົວຂອງທ່ານເອງ ນັ້ນແມ່ນອີກຕົວຢ່າງໜຶ່ງຂອງການພະຍາຍາມເຮັດໃນສິ່ງທີ່ທ່ານບໍ່ສາມາດເຮັດໄດ້.

ຂ້າພະເຈົ້າໝັ້ນໃຈວ່າ ເປັນເລື່ອງປົກກະຕິທີ່ທ່ານພະຍາຍາມຈະປ່ຽນແປງໃນສິ່ງທີ່ທ່ານບໍ່ມັກ ແຕ່ຂໍໃຫ້ທ່ານຄິດເຖິງຄວາມເປັນຈິງຈັກບຶດໜຶ່ງ ທ່ານຈະພົບກັບຄວາມສຳເລັດໃນການປ່ຽນແປງນີ້ໄດ້ແນວໃດ? ທ່ານມີຄວາມຜິດຫວັງຕໍ່ຕົວທ່ານເອງຫຼືສູນເສຍສັນ

ຕິສຸກຫຼືບໍ່? ເມື່ອທ່ານໄດ້ພັກສະຫງົບໃນພຣະເຈົ້າ ຄອຍຖ້າເວລາຂອງພຣະອົງ ໄວ້ວາງໃຈໃນການເຮັດວຽກຂອງພຣະອົງ ໃນຊີວິດຂອງຜູ້ອື່ນ ຫຼືແມ່ນແຕ່ໃນຊີວິດຂອງທ່ານເອງກໍ່ຕາມ .

ຂ້າພະເຈົ້າຂໍສະຫຼຸບໃນຊ່ວງທ້າຍນີ້ອີກເທື່ອໜຶ່ງວ່າ ຖ້າຫາກທ່ານກຳລັງພະຍາຍາມທີ່ຈະເຮັດບາງສິ່ງບາງຢ່າງທີ່ທ່ານເອງບໍ່ສາມາດຈະເຮັດຫຍັງຕໍ່ກັບສິ່ງນັ້ນໄດ້ແລ້ວ ທ່ານຈະຕ້ອງພົບກັບຄວາມຜິດຫວັງແລະທ່ານຈະບໍ່ສາມາດມີຄວາມຊື່ນຊົມກັບຊີວິດທີ່ມີສັນຕິສຸກໄດ້ເລີຍ.

## ໃຫ້ສັນຕິສຸກນຳພາ

ໂກໂລຊາຍ 3:15 ກ່າວ່າ:

ແລະຈົ່ງໃຫ້ສັນຕິສຸກທີ່ມາຈາກພຣະຄຣິດ (ຫຼືຈິດໃຈແຫ່ງການປອງດອງກັນ) ຄຸ້ມຄອງ(ຫຼືເປັນຜູ້ຕັດສິນຢ່າງຕໍ່ເນື່ອງ) ຈິດໃຈຂອງເຈົ້າທັງຫຼາຍ (ເປັນຫຼັກປ້ອມປະການທີ່ຈະຢືນຢັນ ໃຫ້ຄຳຕອບແກ່ທຸກຄຳຖາມທີ່ເກີດຂຶ້ນໃນຄວາມຄິດ )

ໃນເດີ່ນບານນັ້ນຈະມີກຳມະການຕັດສິນຖ້າບອກວ່າໝາກບານຍັງຢູ່ໃນເດີ່ນ ຫຼືອອກນອກເສັ້ນແລ້ວ ສັນຕິສຸກກໍ່ເປັນເໝືອນດັ່ງກຳມະການນັ້ນ ທີ່ຈະຖ້າບອກວ່າຊີວິດຂອງທ່ານຍັງຢູ່ໃນນ້ຳພຣະໄທຂອງພຣະເຈົ້າ ຫຼືບໍ່.

ຫຼາຍຄົນບໍ່ມັກສັນຕິສຸກ ຍ້ອນເຂົາອອກຈາກນ້ຳພຣະໄທຂອງພຣະເຈົ້າແລ້ວ ເຂົາໄດ້ໄປຕາມການຕັດສິນໃຈຂອງເຂົາເອງແທນທີ່ຈະໄປຕາມນ້ຳພຣະໄທຂອງພຣະອົງ ເຂົາເຮັດໃນສິ່ງທີ່ຕົນຄິດຫຼືຮູ້ສຶກວ່າຖືກຕ້ອງ ແທນທີ່ຈະເຮັດຕາມພຣະຄຳຂອງພຣະອົງແລ້ວໃຫ້ສັນຕິສຸກນຳພາເຂົາ ສິ່ງນີ້ເກີດຂຶ້ນກັບຂ້າພະເຈົ້າເລື້ອຍໆເບິ່ງຄືວ່າຖ້າເຮັດກໍ່ຈະດີ ແລະທີ່ອັນທີ່ຍິ່ງໄປກວ່ານັ້ນ ສິ່ງເຫຼົ່ານັ້ນກໍ່ເປັນສິ່ງທີ່ດີອີກດ້ວຍ ເຖິງຢ່າງໃດກໍ່ຕາມຖ້າຂ້າພະເຈົ້າບໍ່ມີສັນຕິສຸກຂ້າພະເຈົ້າກໍ່ໄດ້ຮັບບົດຮຽນຫຼາຍພໍທີ່ຈະບໍ່ຕ້ອງໄປກ່ຽວຂ້ອງກັບສິ່ງເຫຼົ່ານັ້ນ ຈົ່ງໃຫ້ສັນຕິສຸກນຳພາ ຢ່າຊື້ບາງສິ່ງໂດຍສະເພາະຖ້າ

ສິ່ງນັ້ນມີລາຄາສູງ ໂດຍທີ່ທ່ານບໍ່ມີສັນຕິສຸກ ເຖິງແມ່ນວ່າທ່ານຢາກໄດ້ມັນແຮງປານໃດກໍ່ຕາມ ເພາະທ່ານຈະເສຍໃຈຫຼາຍຫາກວ່າທ່ານຝືນການຊີ້ງນຳຂອງພຣະວິນຍານບໍລິສຸດ .

ບາງຄັ້ງຂ້າພະເຈົ້າໄດ້ມີໂອກາດທີ່ຈະແບ່ງປັນ ເຊິ່ງຕົນເອງກໍ່ປາຖະໜາເຊັ່ນນັ້ນ ແຕ່ຂ້າພະເຈົ້າພັດບໍ່ມີສັນຕິສຸກທີ່ຈະເຮັດສິ່ງນັ້ນໂດຍທີ່ບໍ່ຮູ້ສາເຫດວ່າເປັນຫຍັງ ຮູ້ແຕ່ພຽງວ່າບໍ່ມີສັນຕິສຸກ ຂ້າພະເຈົ້າເຄີຍໄດ້ຮັບບົດຮຽນມາແລ້ວວ່າຖ້າຕົນຝືນໃຈຍອມເຮັດໄປ ຜົນສຸດທ້າຍກໍ່ຈະຈົບລົງວ່າເປັນຫຍັງຂ້າພະເຈົ້າຈຶ່ງບໍ່ໄດ້ເຊື່ອຟັງການນຳພາຂອງສັນຕິສຸກ.

ຄັ້ງທີ່ຂ້າພະເຈົ້າເອງມີໂອກາດທີ່ຈະກ່າວແບ່ງປັນ ຂ້າພະເຈົ້າຍັງຈື່ໄດ້ຕອນນັ້ນຂ້າພະເຈົ້າເລີ່ມທີ່ຈະເດີນທາງໄປຮ່ວມງານຕ່າງໆທີ່ມີໂອກາດແບ່ງປັນ ແຕ່ກໍ່ບໍ່ດຸປານໃດ ອັນທີ່ຈິງແລ້ວຕົນເອງກໍ່ຢາກຮັບໂອກາດເຫຼົ່ານັ້ນທັງໝົດທຸກໆຄັ້ງ ຂ້າພະເຈົ້າໄດ້ຮັບເຊີນຈາກຄຣິສຕະຈັກແຫ່ງໜຶ່ງໃນເມືອງເທັກຊັສ ແລະຮູ້ສຶກຕື່ນເຕັ້ນຫຼາຍຈຶ່ງຟ້າວຕອບຮັບທັນທີ ເມື່ອເວລາຜ່ານໄປ 2 – 3 ອາທິດ ທຸກຄັ້ງທີ່ຄິດເຖິງເລື່ອງນີ້ ກໍ່ມີຄວາມຮູ້ສຶກວຸ້ນວາຍໃຈເກີດຂຶ້ນມາພາຍໃນຂອງຂ້າພະເຈົ້າແລະເລີ່ມຮຸນແຮງຂຶ້ນ ຮຸນແຮງຂຶ້ນຈົນໃນທີ່ສຸດກໍ່ບໍ່ມີສັນຕິສຸກ ທີ່ຈະໄປເລີຍ ແຕ່ໃນຂະນະດຽວກັນພຣະເຈົ້າກໍ່ບໍ່ໄດ້ບອກຊ້ຳວ່າເປັນຫຍັງຫຼືຍ້ອນຫຍັງ.

ຂ້າພະເຈົ້າກໍ່ຄອຍຖ້າແລະຄອຍຖ້າ ໃນທີ່ສຸດກໍ່ຮູ້ສຶກວ່າຈຳເປັນຕ້ອງໂທຫາເຂົາເພື່ອປະຕິເສດຄຳໝັ້ນສັນຍາ ພ້ອມກັບບອກເຂົາວ່າຖ້າບໍ່ມີຄົນແທນຂ້າພະເຈົ້າແທ້ໆກໍ່ຈະໄປ ແຕ່ດ້ວຍສາເຫດໃດກໍ່ບໍ່ຮູ້ ຂ້າພະເຈົ້າກໍ່ຍັງບໍ່ມີສັນຕິສຸກ ແລ້ວເຂົາກໍ່ຕົກລົງຍອມຮັບຄຳປະຕິເສດນັ້ນຂອງຂ້າພະເຈົ້າ.

ອີກບໍ່ພໍເທົ່າໃດອາທິດຕໍ່ມາ ຂ້າພະເຈົ້າກໍ່ໄດ້ຮັບຮູ້ວ່າຄຣິສຕະຈັກຢູ່ທີ່ບ້ານຂອງຂ້າພະເຈົ້າໄດ້ມີການຖວາຍອາຄານໃໝ່ເຊິ່ງຂ້າພະເຈົ້າກໍ່ເຄີຍເປັນຮອງສິດຍາພິບານບ່ອນນັ້ນໄລຍະໜຶ່ງ ກ່ອນທີ່ຂ້າພະເຈົ້າຈະເລີ່ມງານຮັບໃຊ້ຂອງຕົນເອງ ເປັນສິ່ງສຳຄັນ ຫຼາຍທີ່ຂ້າພະເຈົ້າຕ້ອງຢູ່ກັບພວກເຂົາໃນໂອກາດນັ້ນ.

ເປັນຫຍັງພຣະເຈົ້າຈຶ່ງບໍ່ບອກຂ້າພະເຈົ້າເລີຍວ່າ ຍ້ອນສາເຫດຫຍັງ ດ້ວຍເຫດ ແລະຜົນ ຂອງ ພຣະອົງເອງ ພຣະອົງຊົງເລືອກທີ່ຈະບໍ່ບອກຂ້າພະເຈົ້າ ໃນພຣະຄຳຂອງພຣະອົງກ່າວໄວ້ວ່າ ຈົ່ງຍອມຮັບການນຳພາດ້ວຍສັນຕິສຸກ ຫຼາຍໆຄັ້ງທີ່ພຣະອົງຊົງໃຊ້ສິ່ງນີ້ເພື່ອຈະຊີ້ໃຫ້ເຮົາເຫັນວ່າເຮົາຢູ່ໃນນ້ຳພຣະໄທຂອງພຣະເຈົ້າ ຫຼືອອກຈາກນ້ຳພຣະໄທຂອງພຣະເຈົ້າແລ້ວ ແລະໃນເວລາຕໍ່ມາທ່ານກໍ່ຈະໄດ້ຮູ້ເຖິງເຫດຜົນວ່າເປັນຫຍັງ ຫຼື ບາງເທື່ອກໍ່ອາດຈະບໍ່ຮູ້ເລີຍກໍ່ມີ.

ທ່ານຈະບໍ່ສາມາດມັກຊີວິດທີ່ເຕັມໄປດ້ວຍສັນຕິສຸກໄດ້ເລີຍຫາກວ່າທ່ານບໍ່ເຊື່ອຟັງຫຼືເຮັດຕາມການຊົງນຳຂອງພຣະເຈົ້າ.

## ໃຜຈະລັກເອົາສັນຕິສຸກຂອງທ່ານ?

ບໍ່ຕ້ອງສົງໄສເລີຍວ່າຈະມີບາງຄົນທີ່ລົບກວນທ່ານສະເໝີ ຍ້ອນຊາຕານໄດ້ທຳການສຶກສາທ່ານ ແລະບາງເທື່ອມັນອາດຈະຮູ້ຈັກທ່ານດີກວ່າທ່ານຮູ້ຈັກຕົນເອງອີກດ້ວຍ ມັນຮູ້ວ່າແມ່ນຫຍັງຈະເປັນສິ່ງທີ່ລົບກວນທ່ານໄດ້ ທ່ານເອງຕ້ອງຮູ້ວ່າແມ່ນຫຍັງເປັນສິ່ງທີ່ລົບກວນທ່ານ ເພື່ອຈະລະມັດລະວັງຕົວໄດ້ ທີ່ຈະບໍ່ໃຫ້ຂາດຈາກສັນຕິສຸກໃນເຫດການທັງປວງ.

ສິ່ງທີ່ຈະລັກສັນຕິສຸກຂອງທ່ານແຕ່ລະຄົນນັ້ນ ບໍ່ແມ່ນສິ່ງດຽວກັນ ບາງສິ່ງລົບກວນຂ້າພະເຈົ້າຫຼາຍ ແຕ່ພັດບໍ່ເປັນສິ່ງທີ່ລົບກວນ ເດຟ ເລີຍ ຕົວຢ່າງເຊັ່ນ: ຂ້າພະເຈົ້າມັກມິດງຽບ ແຕ່ສຳລັບລາວແລ້ວສຽງດັງບໍ່ແມ່ນບັນຫາທີ່ລົບກວນລາວເລີຍ ລາວສາມາດອ່ານໜັງສືໄດ້ຢ່າງສະບາຍ ທັງໆທີ່ລູກສາວເປີດເທັບສຽງດັງພ້ອມກັບລູກຊາຍອາຍຸເກົ້າປີ ກຳລັງຫຼິ້ນຕໍ່ສູ້ກັບໝາຂອງລາວເທິງເຮືອນ ຂ້າພະເຈົ້າບໍ່ມັກທີ່ຈະເຮັດຫຍັງແບບຮີບຮ້ອນ ແລະຂ້າພະເຈົ້າກໍ່ຊັງການທີ່ຕ້ອງຊັກຊ້າ ແລ້ວຕໍ່ມາກໍ່ຕ້ອງເລັ່ງເອົາຕອນນາທີສຸດທ້າຍ ນີ້ເດຊາຕານມັນຮູ້ຈຸດອ່ອນເຫຼົ່ານີ້ຂອງຂ້າພະເຈົ້າ ມັນກໍ່ເລີຍໃຊ້ສະຖານະການນີ້ມາລັກສັນຕິສຸກຂອງຂ້າພະເຈົ້າໄປ ແຕ່ຖ້າພວກເຮົາຈະເດີນທາງບໍ່ວ່າຈະບິນໄປໃສກໍ່ຕາມ ທຸກຄັ້ງພວກເຮົາຈະໄປທີ່ເດີ່ນບິນກ່ອນ 1 ຊົ່ວໂມງ ເຮົາຕ້ອງໄປສະໜາມກອຟ ແຕ່ເຊົ້າເພື່ອຖ້າຮັບຄິວຫຼິ້ນ ຖ້າວ່າຊາຕານມັນຈັບຈຸດໄດ້ ໂດຍຂັດ

ຂວາງໃຫ້ຊ້າລົງດ້ວຍເຫດການໃດໜຶ່ງ ເວລານັ້ນພວກເຮົາກໍ່ຈະສູນເສຍສັນຕິສຸກຂອງພວກເຮົາ.

ເຮົາແຕ່ລະຄົນແຕກຕ່າງກັນໄປ ດັ່ງນັ້ນຊາຕານມັນຈຶ່ງໃຊ້ວິທີການທີ່ແຕກຕ່າງກັນຕໍ່ເຮົາອີກດ້ວຍ ຈົ່ງສະຫຼາດກວ່າມັນ ມັນຊົມເຊີຍທ່ານເພື່ອຈະໃຫ້ທ່ານຜິດຫວັງ ແລ້ວແມ່ນຫຍັງເປັນຜູ້ລັກເອົາສັນຕິສຸກຂອງທ່ານໄປ ຈົ່ງຂຽນລາຍການອອກມາແລະເມື່ອຂຽນແລ້ວໆ ກໍ່ເອົາໄປເປີດເຜີຍໃຫ້ແກ່ຄົນໃນຄອບຄົວຫາວິທີການທີ່ຈະປັບຕົວ ເພື່ອຈະມີຄວາມໄວຕໍ່ການເຫັນອົກເຫັນໃຈຊ່ວຍເຫຼືອເຊິ່ງກັນແລະກັນ ເພື່ອຈະຫຼີກລ່ຽງໃນສິ່ງທີ່ເຮັດໃຫ້ເກີດຈຸດອ່ອນນັ້ນ.

ເດຟ ລາວມັກຫຼິ້ນກອຟເປັນຊີວິດຈິດໃຈ ສ່ວນຂ້າພະເຈົ້າກໍ່ຫຼິ້ນພຽງແຕ່ເພີດເພີນ ຍິ້ມຫົວມ່ວນຊື່ນກາງສະໜາມເທົ່ານັ້ນຂ້າພະເຈົ້າໄດ້ຮຽນຮູ້ວ່າເປັນການບໍ່ຄ່ອຍສະຫຼາດປານໃດດອກ ໃນເມື່ອຂ້າພະເຈົ້າຫຼິ້ນກອຟກັບລາວ ແລະຫົວຂວັນລາວເມື່ອລາວຕີລູກບໍ່ໄດ້ດີ ແມ່ນຢູ່ເຮົາອາດຈະມີຄວາມມ່ວນຊື່ນ ແຕ່ຂ້າພະເຈົ້າຈຳເປັນຕ້ອງໃຫ້ກຳລັງໃຈລາວພ້ອມ ບໍ່ມີເຫດຜົນທີ່ດີເລີຍທີ່ຈະເຮັດຫຍັງບາງຢ່າງລົງໄປ ໂດຍກໍ່ໃຫ້ເກີດຄວາມສູນເສຍສັນຕິສຸກຂອງຄົນອື່ນ ເມື່ອທ່ານໄດ້ໃຊ້ຊີວິດຢູ່ກັບໃຜຈັກຄົນໜຶ່ງເປັນເວລາດົນທ່ານກໍ່ຈະເລີ່ມຮູ້ເຖິງຈຸດອ່ອນຂອງເຂົາທີ່ມີຢູ່ຄືກັບທີ່ທ່ານເອງກໍ່ມີ

ນຳ ຈິ່ງພະຍາຍາມຊູເຊີ່ງກັນແລະກັນໃຫ້ໄດ້ຮັບໄຊຊະນະເໜືອສິ່ງນັ້ນດີກວ່າ ດ້ວຍການຫຼີກລ່ຽງສິ່ງທີ່ເຮັດໃຫ້ເກີດຈຸດອ່ອນນັ້ນ.

ເດຟ ໄດ້ຊ່ວຍຂ້າພະເຈົ້າໃນຈຸດອ່ອນທີ່ຂ້າພະເຈົ້າມີ ລາວພະຍາຍາມທີ່ຈະມິດງຽບເມື່ອເຫັນວ່າ ຂ້າພະເຈົ້າກຳລັງອ່ານໜັງສືຫຼືພັກຜ່ອນ ລາວພະຍາຍາມໜຸນໃຈໃຫ້ຂ້າພະເຈົ້າໄດ້ພັກຜ່ອນ ເພາະລາວຮູ້ວ່າຖ້າຂ້າພະເຈົ້າເມື່ອຍ ກໍ່ຈະເປີດຊ່ອງທາງໃຫ້ມານລັກສັນຕິສຸກຂອງຂ້າພະເຈົ້າໄປ ຄາລາເຕຍ 6:2 ກ່າວວ່າ :ຈົ່ງຊ່ວຍຮັບພາລະໜັກຂອງກັນແລະກັນ ຈົ່ງຊ່ວຍກັນແບກພາລະແບກຈຸດອ່ອນຂອງກັນແລະກັນ ໂດຍຮັບຮູ້ວ່າເຮົາເອງກໍ່ມີຈຸດອ່ອນ ຫຼາຍດ້ວຍການອະທິຖານເພື່ອກັນແລະກັນ.

## ເປັນຫຍັງມານຈຶ່ງພະຍາຍາມລັກສັນຕິສຸກຂອງທ່ານໄປ?

ເຮົາກໍ່ຮູ້ຢູ່ວ່າສັນຕິສຸກໄດ້ນຳພາເຮົາເຂົ້າຜູກພັນກັບພຣະວິນຍານບໍລິສຸດ ຫຼືຈະເວົ້າອີກຢ່າງໜຶ່ງກໍ່ຄື ພຣະວິນຍານບໍລິສຸດຈະເຮັດວຽກໄດ້ກໍ່ຕໍ່ເມື່ອມີບັນຍາກາດແຫ່ງສັນຕິສຸກເທົ່ານັ້ນ ຂ້າພະເຈົ້າເຊື່ອວ່າ ເມື່ອມີບັນຍາກາດແຫ່ງສັນຕິສຸກເທົ່ານັ້ນ ແລະເຊື່ອວ່າມີຣິດອຳນາດຫຼາຍໃນສັນຕິສຸກອີກດ້ວຍ ຈາກໂຢຮັນ 14:27 ບອກວ່າສັນຕິສຸກນັ້ນເປັນມໍລະດົກຂອງເຮົາຈາກພຣະເຢຊູ ພຣະອົງ ກ່າວວ່າເຮົາມອບສັນຕິສຸກ(ຂອງເຮົາເອງ) ໃຫ້ແກ່ພວກເຈົ້າ.

ຖ້າທ່ານປະເຊີນໜ້າກັບບັນຫາດ້ວຍການຍຶດໝັ້ນຮັກສາສັນຕິສຸກໄວ້ ມານກໍ່ບໍ່ສາມາດເຮັດໃຫ້ທ່ານໝົດຫວັງໄດ້ ເພາະບັນຫານັ້ນມັນບໍ່ມີອຳນາດຫຍັງເໜືອນທ່ານ ໄຊຊະນະຂອງທ່ານຢູ່ທີ່ການຕັ້ງໝັ້ນຢູ່ໃນທ່າທີທີ່ສະຫງົບໄວ້ວາງໃຈ ຊາຕານມັນໄດ້ຮຽກຮ້ອງໃຫ້ທ່ານຜິດຫວັງແລະຢ້ານກົວຕະຫຼອດເວລາຢູ່ແລ້ວ.

ເມື່ອທ່ານຕົກຢູ່ໃນບັນຫາຫຼືສະຖານະການບາງຢ່າງ ຈົ່ງຕັ້ງເປົ້າໝາຍໄວ້ວ່າທ່ານຈະບໍ່ຫວັ່ນໄຫວ ຢ່າຕົກໃນບ້ວງແຮ້ວຂອງຊາຕານໂດຍການປ່ອຍອາລົມໃຫ້ຫວັ່ນໄຫວ ມານມັກທີ່ຈະເຮັດໃຫ້ທ່ານໃຈຮ້າຍຢູ່ແລ້ວ ເພາະເມື່ອໃດກໍ່ຕາມທີ່ໃຈຮ້າຍກໍ່ມັກຈະເຮັດສິ່ງໜຶ່ງກໍ່ຄືປາກເວົ້າອອກມາ ເຊິ່ງບົ່ງບອກໃຫ້ຊາຕານເລີ່ມກິດຈະການຂອງມັນໄດ້.

ຢາໂກໂບ 3:5 – 6 ຜູ້ຂຽນໄດ້ບັນຍາຍວ່າ ລີ້ນເປັນອະໄວຍະວະນ້ອຍໆ ແຕ່ມັນສາມາດເລີ່ມກໍ່ໄຟກອງໃຫຍ່ໄດ້ ເຊັ່ນດຽວກັບຄຳເວົ້າທີ່ຢູ່ໃນແງ່ລົບ ທີ່ທ່ານເວົ້າອອກມານັ້ນ ເຖິງແມ່ນວ່າມັນມີແນວເຊື້ອງ ຊ້ອນມາເລັກໆ ນ້ອຍໆ ມັນກໍ່ສາມາດສິ່ງຜົນເສຍແກ່ຊີວິດຂອງທ່ານໄດ້ອີກດ້ວຍ ມັນເປັນໄຟທີ່ເກີດຈາກມາລົກ ເປົ້າໝາຍຂອງຊາຕານກໍ່ຄືໃຫ້ທ່ານຄວບຄຸມອາລົມບໍ່ຢູ່ ມານມັນເຮັດວຽກໜັກຕະຫຼອດເວລາທີ່ທ່ານກຽມພ້ອມຈະໄປໂບດ ຫຼືໄປເຂົ້າກຸ່ມຮຽນພຣະຄຳພີ ໃນທັນທີທັນໃດ ເບິ່ງຄືວ່າເຊົ້າວັນອາທິດມື້ນັ້ນເປັນເຊົ້າທີ່ວຸ້ນວາຍທີ່ສຸດ ປານກັບວ່າບໍ່ມີເຊົ້າວັນອາທິດໃດທີ່ທ່ານໄດ້ໄປໂບດໂດຍບໍ່ມີໃຜຈະບໍ່ໃຈຮ້າຍເລີຍ ເຊິ່ງມື້ທຳມະດາກໍ່ດີກັນທຸກຄົນ ແຕ່ມາເຖິງເຊົ້າວັນອາທິດກໍ່ມີເຄື່ອງຂອງເສຍແດ່ ແກ້ວແຕກແດ່ ຫຼາຍໆຢ່າງກໍ່ເກີດຂຶ້ນບໍ່ຄືກັບເຊົ້າຂອງມື້ອື່ນໆ ລູກຂອງເຮົາກໍ່ຮັກກັນດີໃນມື້ທຳມະດາ ແຕ່ເຖິງວັນອາທິດກໍ່ຜິດຖຽງກັນສຽງດັງຫຼາຍແລະສັບສົນວຸ້ນວາຍ ແລະທັງຍຸແຍ່ໃຫ້ເກີດຄວາມໃຈຮ້າຍ (ຈື່ໄດ້ແມ່ນບໍວ່າຂ້າພະເຈົ້າບໍ່ມັກສຽງດັງໆ).

ໃນທີ່ສຸດຂ້າພະເຈົ້າກໍ່ຈະເລີ່ມຈົ່ມ ແລ້ວເດຟກໍ່ບໍ່ມັກການຈົ່ມອີກຊ້ຳ ຕໍ່ມາລາວກໍ່ຫ້າມໃຫ້ຂ້ອຍເຊົາຈົ່ມ ຂ້ອຍກໍ່ເລີ່ມໃຈຮ້າຍໃສ່ລາວ ລູກເຕົ້າຂອງເຮົາກໍ່ຮ້ອງໄຫ້ຍ້ອນຜິດກັນ ໃນທ່າມກາງເຫດການທີ່ວຸ້ນວາຍແນວນີ້ຕ້ອງມີໃຜຈັກຄົນສຳນຶກໄດ້ແລະຄວບຄຸມເຫດການໃຫ້ຢູ່ ທ່ານຄືຊິຈື່ເຫດການເທົ່ານີໄດ້ດີເນາະ.

ເມື່ອຂ້າພະເຈົ້າເຫັນຈາກພຣະຄຳພີຢາໂກໂບ 3:18 ຂ້າພະເຈົ້າເຂົ້າໃຈວ່າຍ້ອນຫຍັງເຫດການທີ່ວຸ້ນວາຍແບບນີ້ຕ້ອງເກີດຂຶ້ນທຸກຄັ້ງທີ່ເຮົາຈະໄປຟັງພຣະຄຳຂອງພຣະເຈົ້າ ໃນພຣະຄຳພີຕອນນີ້ກ່າວກັບເຮົາວ່າ ຜູ້ສ້າງສັນຕິສຸກຫວ່ານສັນຕິຈຶ່ງໄດ້ເກັບກ່ຽວຄວາມຊອບທຳ ດັ່ງນັ້ນໝາຍຄວາມວ່າການທີ່ພຣະຄຳຂອງພຣະເຈົ້າຈະຢັ່ງຮາກແລະເກີດຜົນດີໃນຊີວິດຂອງເຮົານັ້ນ ມັນຕ້ອງໄດ້ຮັບການສອນຈາກໃຜບາງຄົນ ເຊິ່ງລາວເອງກໍ່ເປັນຜູ້ສ້າງສັນຕິແລະເຮົາເອງກໍ່ຕ້ອງຟັງດ້ວຍທ່າທີແຫ່ງຄວາມສະຫງົບສຸກ.

ລອງຄິດເບິ່ງກັບຊີວິດຂອງທ່ານເອງດູວ່າ ມີຈັກເທື່ອທີ່ສັດຕູຂອງທ່ານຊະນະທ່ານ ເມື່ອມັນທົດລອງໃຫ້ທ່ານໃຈຮ້າຍ ກ່ອນຈະໄປຟັງພຣະຄຳຂອງພຣະເຈົ້າ? ຈື່ໄວ້ສະເໝີວ່າທ່ານຕ້ອງລະວັງເລ່ກົນຂອງມານ ຢ່າຕົກຂຸມໃນກົນອຸບາຍຂອງມານ 2 ໂກຣິນໂທ 2:11 ກ່າວວ່າ : ເພື່ອບໍ່ໃຫ້ມານຊາຕານມີໄຊເໜືອເຮົາເພາະເຮົາຮູ້ກົນອຸບາຍຂອງມັນແລ້ວ ຈຶ່ງສັງເກດເຫດການແລະສະຫຼາດກວ່າມານ.

1ເປໂຕ 5:8 ກ່າວວ່າ: ເຈົ້າທັງຫຼາຍຈົ່ງຄອຍລະວັງຕົວແລະເຝົ້າຢູ່ ດ້ວຍວ່າ,ສັດຕູຂອງພວກເຈົ້າຄືມານ ມັນທ່ຽວວົນວຽນໄປມາເໝືອນໂຕສິງ ທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້ ຢ່າໃຫ້ຕ້ອງເປັນທ່ານເລີຍທີ່ຕົກເປັນເຫຍື່ອຂອງມັນ ຂ້າພະເຈົ້າຂໍແນະນຳທ່ານວ່າ ເມື່ອມີເຫດການຫຍັງພວມຊີ້ໃຫ້ເຫັນວ່າຈະເກີດຄວາມໃຈຮ້າຍ, ຜິດຫວັງ ໃນທັນໃດນັ້ນກໍ່ໃຫ້ທ່ານຢຸດແລະຖາມຕົນເອງດ້ວຍ

ຄຳຖາມ ຊາຕານກຳລັງຈະເຮັດຫຍັງຢູ່? ຖ້າຂ້າພະເຈົ້າປ່ອຍໃຫ້ລະເບີດໄປຕາມອາລົມຜົນກະທົບທີ່ເກີດຂຶ້ນຈະເປັນແນວໃດ?.

ເອເຟໂຊ 4:26-27 ເປັນຂໍ້ພຣະຄຳພີອີກຕອນໜຶ່ງ ທີ່ໄດ້ແນະນຳໃຫ້ເຮົາບໍ່ຍອມເປີດໂອກາດໃຫ້ມານເຂົ້າໃນຊີວິດຂອງເຮົາດ້ວຍການຢາກຮ້າຍ ຂໍ້ 26 ບອກວ່າ ຢ່າໃຫ້ເຖິງຕາເວັນຕົກດິນທ່ານຍັງຮ້າຍຢູ່ ມີຄວາມໝາຍວ່າຢ່າປ່ອຍໃຫ້ຕົວເອງຕົກຢູ່ໃນຄວາມຢາກຮ້າຍ.

ຂໍ້ 27 ບອກວ່າ: ຢ່າປ່ອຍໂອກາດໃຫ້ມານ ເມື່ອທ່ານໃຈຮ້າຍ (ອາລົມເສຍ) ທ່ານບໍ່ມີຄວາມຊົມຊື່ນຍິນດີ ເມື່ອທ່ານບໍ່ມີຄວາມຊົມຊື່ນຍິນດີ ທ່ານກໍ່ຈະຂາດກຳລັງໄປພ້ອມ ເນເຫມີຢາ 8:10 ກ່າວວ່າ:ເພາະຄວາມຊື່ນບານຂອງຕົນໃນພຣະເຈົ້າເປັນກຳລັງຂອງທ່ານ ; ເພງສັນລະເສີນ 42:5 ດາວິດເວົ້າກັບຈິດໃຈຂອງຕົນເອງວ່າເປັນຫຍັງຈຶ່ງໂສກເສົ້າແລະຍາກລຳບາກຍິ່ງ? ເອຊາຢາ 30:15 ກ່າວວ່າ ຈົ່ງກັບຄືນມາແລະໄວ້ວາງໃຈໃນເຮົາຢ່າງງຽບໆສາ ແລ້ວໝູ່ເຈົ້າກໍ່ຈະເຂັ້ມແຂງແລະປອດໄພ ເຮົາເຫັນວ່າມານຕ້ອງການໃຫ້ເຮົາກະວົນກະວາຍເພື່ອມັນຈະລັກເອົາກຳລັງຂອງເຮົາໄປ .

ຂ້າພະເຈົ້າໄດ້ຮຽນຮູ້ວ່າພຣະວິນຍານບໍລິສຸດ ເຄື່ອນໄຫວໃນບັນຍາກາດທີ່ສະຫງົບສຸກ ຈົ່ງສ້າງບັນຍາກາດໃນເຮືອນ, ສຳນັກງານ,

ຄຣິສຕະຈັກ ແລະໜ່ວຍງານຂອງທ່ານໃຫ້ຢູ່ໃນຄວາມສະຫງົບ ຫາກ ທ່ານ ຍອມເຮັດແນວນັ້ນເປັນການຖວາຍກຽດແກ່

ພຣະຄຳຂອງພຣະເຈົ້າ ແລະທ່ານຈະໄດ້ຮັບຜົນຕອບແທນຈາກ ການເຊື່ອຟັງຂອງທ່ານ .

ຈື່ໄດ້ບໍ ພຣະເຢຊູຄຣິດໄດ້ສົ່ງສາວົກ 70 ຄົນອອກໄປເປັນຄູ່ໆ ເພື່ອເຮັດການອັດສະຈັນໄລ່ຜີອອກ, ປິ່ນປົວຄົນເຈັບໄຂ້ໄດ້ປ່ວຍ, ປະກາດຂ່າວປະເສີດ ພຣະອົງໄດ້ຊົງສັ່ງພວກເຂົາວ່າ ຈົ່ງເຂົ້າໄປໃນເມືອງ ແລ້ວເຂົ້າໄປໃນບ້ານແລ້ວຈົ່ງເວົ້າກ່ອນວ່າ ສັນຕິສຸກຈົ່ງມີແກ່ເຮືອນຫຼັງນີ້ ແລ້ວຢູ່ນຳເຂົາທີ່ນັ້ນ ຖ້າເຂົາບໍ່ໄດ້ຮັບການຕ້ອນຮັບເຂົາຄວນຈະປັດຂີ້ຝຸ່ນດິນຂອງເມືອງນັ້ນອອກຈາຕີນຂອງພວກເຂົາແລ້ວເດີນທາງໄປຕໍ່ ປະກົດໃນ ລູກາ 10:1 – 10,17 ຍ້ອນຫຍັງຈຶ່ງເປັນແນວນັ້ນ? ກໍ່ຍ້ອນງານຂອງພວກເຂົາຈະຂາດກຳລັງ ນອກຈາກວ່າເຂົາຈະຢູ່ໃນສັນຕິສຸກ.

ຂ້າພະເຈົ້າແນ່ໃຈແທ້ໆວ່າ ທ່ານກຳລັງໄດ້ຮັບການສຳແດງຈາກເນື້ອຫາໃນປຶ້ມເຫຼັ້ມນີ້ທີ່ນຳເອົາມາໃຫ້ທ່ານ ທ່ານໄດ້ຕັ້ງສະຕິຄວບຄຸມຕົນເອງ ໃຫ້ຢູ່ໃນສັນຕິສຸກສະເໝີໄປຫຼືບໍ່?

ໃນລູກາ 22:46 ສອນໃຫ້ທ່ານອະທິຖານເພື່ອບໍ່ໃຫ້ຖືກທົດລອງ ພຣະເຢຊູໄດ້ກ່າວກັບສາວົກຂອງພຣະອົງວ່າຈົ່ງລຸກຂຶ້ນອະທິ

ຖານເພື່ອພວກເຈົ້າຈະບໍ່ຖືກທົດລອງ ໂດຍກໍາລັງຄວາມສາມາດຂອງທ່ານເອງ ບໍ່ມີທາງທີ່ຈະຕໍ່ຕ້ານມານຮ້າຍໄດ້ ພຣະເຈົ້າຈະໃຫ້ພຣະຄຸນຂອງພຣະອົງແກ່ທ່ານ ເພື່ອຈະຕໍ່ຕ້ານມານທີ່ມັນຈະມາລັກເອົາສັນຕິສຸກຂອງທ່ານໄປ ຈົ່ງຂໍກັບພຣະເຈົ້າໃຫ້ເສີມກໍາລັງຂອງທ່ານໄວ້.

ໂຢຮັນ 15:5 ກ່າວວ່າ ເພາະຖ້າແຍກຈາກເຮົາແລ້ວ ພວກເຈົ້າບໍ່ສາມາດເຮັດສິ່ງໃດໄດ້ ຢ່າພະຍາຍາມເຮັດດ້ວຍກໍາລັງຂອງຕົວທ່ານເອງ ຈົ່ງຂໍຄວາມຊ່ວຍເຫຼືອເພາະທ່ານສາມາດເຮັດ ທຸກຢ່າງໄດ້ໂດຍພຣະເຈົ້າຜູ້ເສີມກໍາລັງຂອງທ່ານ (ຟີລິບປອຍ 4:13) ແຕ່ໂດຍທ່ານເອງຄົນດຽວນັ້ນບໍ່ສາມາດເຮັດຫຍັງໄດ້ໂຢຮັນ 5:30 ພຣະເຢຊູຄຣິດບໍ່ສາມາດເຮັດຫຍັງໄດ້ໂດຍລໍາພັງພຣະອົງເອງ ທ່ານຈໍາເປັນຕ້ອງມີທ່າທີຖ່ອມໃຈກ່ອນເພື່ອທ່ານຈະໄດ້ຮັບການຊ່ວຍເຫຼືອຈາກພຣະເຈົ້າ 1ເປໂຕ5:5 ກ່າວວ່າ : ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງແຕ່ຊົງປະທານພຣະຄຸນແກ່ຜູ້ທີ່ຖ່ອມໃຈລົງ.

ຂ້າພະເຈົ້າຂໍສະຫຼຸບວ່າ :ຊາຕານຕ້ອງການລັກເອົາສັນຕິສຸກຂອງທ່ານເພື່ອມັນຈະສາມາດເຈາະເລິກເຂົ້າໄປອີກ ເພື່ອລັກກໍາລັງຂອງທ່ານໄປ ເພາະມານຕ້ອງການໃຫ້ທ່ານອ່ອນແອ, ມີກໍາລັງໜ້ອຍ ແຕ່ຂ້າພະເຈົ້າຂໍໜຸນໃຈທ່ານ ໃຫ້ທ່ານເຂັ້ມແຂງໃນພຣະເຈົ້າ ແລະມີກໍາລັງຂຶ້ນໃນພຣະອົງ (ເອເຟໂຊ 6:10) ໃຫ້ເຮົາຍຶດໝັ້ນຢູ່ໃນສັນຕິສຸກໄວ້.

# ທີ່ຕັ້ງໝັ້ນຂອງຜູ້ເຊື່ອ
# ຂະນະ
# ທີ່ຖືກທົດລອງ

ເອເຟໂຊ 6:13 ກ່າວວ່າ ເມື່ອເຮັດແລ້ວຈະຢູ່ຢ່າງໝັ້ນຄົງໄດ້ (ໃນຈຸດຢືນຂອງທ່ານ ຈຸດຢືນຂອງທ່ານແມ່ນຫຍັງ? ເອເຟໂຊ 2:6 ສອນເຮົາໄວ້ວ່າ:ຈຸດຢືນຂອງເຮົາແມ່ນໃນພຣະຄຣິດ ຄຳວ່າຢືນ ແປມາຈາກພາສາກຣີກເຊິ່ງມີຄວາມໝາຍວ່າເຂົ້າສະໜິດ ດັ່ງໃນ ໂຢຮັນ 15:7 ເຊິ່ງພຣະເຢຊູໄດ້ກ່າວໄວ້ວ່າ: ຖ້າເຈົ້າທັງຫຼາຍເຂົ້າສະໜິດຢູ່ໃນເຮົາແລະຖ້ອຍຄຳຂອງເຮົາຝັງຢູ່ໃນພວກເຈົ້າແລ້ວ ພວກເຈົ້າປາຖະໜາສິ່ງໃດຈົ່ງຂໍແລ້ວສິ່ງນັ້ນຈະເກີດມີແກ່ພວກເຈົ້າ ຖ້າຈຸດຢືນຂອງທ່ານເປັນການເຂົ້າສະໜິດໃນພຣະເຈົ້າແລ້ວກໍ່ນັບວ່າເປັນຈຸດແຫ່ງຣິດເດດທີ່ໝັ້ນຄົງ.

ເຮັບເຣີ ບົດທີ່ 4:11ບອກເຮົາວ່າ: ໃຫ້ເຮົາອົດສາພະຍາຍາມໃຫ້ໄດ້ເຂົ້າສູ່ບ່ອນພັກຜ່ອນນັ້ນ ໂດຍຄວາມໄວ້ວາງໃຈແລະຄວາມເຊື່ອຟັງ ໃນຂະນະທີ່ຕົກຢູ່ໃນການທົດສອບ ຈົ່ງສັງເກດວ່າພຣະເຈົ້າໃຫ້ທ່ານເຮັດຫຍັງ? ຈົ່ງເຮັດຕາມແລະພ້ອມກັນນັ້ນ ຈົ່ງຍຶດຈຸດຢືນຂອງທ່ານໃນພຣະຄຣິດ ແລະທ່ານຈະເຫັນພຣະເຈົ້າເຄື່ອນໄຫວໃນສະຖານະການຂອງທ່ານ ພຣະຄຳພີບອກເຮົາວ່າ :ຢ່າຢ້ານເລີຍ ໝັ້ນຄົງໄວ້ຖ້າເບິ່ງຄວາມລອດທີ່ມາຈາກພຣະເຈົ້າ

ຄຳເຫຼົ່ານີ້ແມ່ນການພັກຜ່ອນ, ເຂົ້າສະໜິດ, ຢືນ, ໝັ້ນຄົງໄວ້ ລ້ວນແຕ່ ບອກໃຫ້ເຮົາຍຶດສັນຕິສຸກໄວ້ໃຫ້ໝັ້ນ ຟີລິບປອຍ1:2 ນີ້ເປັນຂໍ້ພຣະຄຳພີຂໍ້ໜຶ່ງທີ່ມີພະລັງອຳນາດຫຼາຍ ທີ່ຊີ້ໃຫ້ເຫັນເຖິງຄວາມຊັດເຈນຂອງເລື່ອງນີ້ ເຊິ່ງກ່າວວ່າທ່ານຢ່າຢ້ານກົວຜູ້ທີ່ຂັດຂວາງທ່ານເລີຍ ເມື່ອເປັນແບບນີ້ກໍ່ເປັນທີ່ຈະແຈ້ງແກ່ພວກເຂົາວ່າ ພວກເຂົາຈະເຖິງ ຄວາມຈິບຫາຍ ແຕ່ພວກເຂົາກໍ່ພັດຈະເຖິງຄວາມພົ້ນແລະເລື່ອງ ນັ້ນເປັນມາຈາກພຣະເຈົ້າ ຂໍ້ພຣະຄຳພີນີ້ບອກທ່ານວ່າເຖິງວ່າແມ່ນຫຍັງຈະເກີດຂຶ້ນກໍ່ຕາມ ຂໍໃຫ້ທ່ານຍຶດສັນຕິສຸກໄວ້ໃຫ້ໝັ້ນ ເມື່ອທ່ານເຮັດໄດ້ແນວນັ້ນ ຊາຕານກໍ່ຈະພ່າຍແພ້ໄປ ມັນຈຶ່ງເຮັດຫຍັງໃຫ້ທ່ານບໍ່ໄດ້ ໃນເມື່ອທ່ານຍອມໃຫ້ຕົນໃຈຮ້າຍ ດ້ວຍທ່າທີນີ້ຊີ້ໃຫ້ເຫັນວ່າທ່ານກຳລັງດຳເນີນຢູ່ໃນຄວາມເຊື່ອ ທ່ານເອງໄດ້ເຂົ້າສູ່ການພັກຜ່ອນໃນພຣະເຈົ້າແລ້ວ.

ຂະນະທີ່ທ່ານກຳລັງສ້ອມແປງບັນຫາຈຸດອ່ອນຂອງທ່ານຢູ່ນັ້ນ ຈົ່ງຊື່ນໃຈກັບຊີວິດເທີ້ນ ຂ້າພະເຈົ້າເຊື່ອແທ້ໆວ່າ ຄົນສ່ວນຫຼາຍຈະມີຄວາມຄິດທີ່ບໍ່ຈະແຈ້ງ ຄືເຂົາມັກຈະຄິດວ່າເປັນການຜິດປົກກະຕິຖ້າຄົນຊົມຊື່ນຍິນດີໃນຂະນະທີ່ຊີວິດຍັງມີບັນຫາຢູ່.

ຂ້າພະເຈົ້າ ເອງມີຄວາມເຂົ້າໃຈກ່ຽວກັບບັນຫາແຫ່ງຄວາມຄິດແບບນີ້ດີເມື່ອຕອນທີ່ຂ້າພະເຈົ້າກັບເດຟ ຕ້ອງປະເຊີນກັບການທົດລອງຫຼືບັນຫາຕ່າງໆ ຂ້າພະເຈົ້າ ມັກອຸກໃຈແລະຮ້າຍໃສ່ລາວ ເພາະເບິ່ງຄືວ່າລາວບໍ່ຮ່ວມທຸກຫຍັງກັບຂ້າພະເຈົ້າເລີຍ.

ບັນຫາຂອງເຮົາຫຼາຍຄັ້ງກໍ່ຈະເປັນເລື່ອງການເງິນ ເບິ່ງຄື ວ່າເດຟລາວມີຄວາມເຊື່ອເປັນພິເສດ ກ່ຽວກັບເລື່ອງເງິນ ລາວກໍ່ ເວົ້າຢູ່ເລື້ອຍໆ ວ່າເຮົາໄດ້ຖວາຍສິດລິດ ຖວາຍປົກກະຕິ ເຮົາເຫັນ ຄວາມຈຳເປັນຢູ່ ພຣະຄຳພີບອກເຮົາວ່າ ເຮົາຈົ່ງປະຄວາມກະວົນ ກະວາຍຂອງພວກເຈົ້າໄວ້ກັບພຣະອົງ ເພາະວ່າພຣະອົງຊົງຫວ່ງ ໃຍພວກເຈົ້າ 1ເປໂຕ 5:7 ພຣະຄຳພີບອກເຮົາວ່າພຣະອົງຈະປະ ທານສິ່ງຂອງທີ່ເຮົາຂາດຢູ່ນັ້ນ (ຟີລິບປອຍ4:19) ແລ້ວເປັນຫຍັງ ເຮົາຍັງກະວົນກະວາຍຫຼາຍແທ້? ຄວາມກະວົນກະວາຍບໍ່ເຄີຍນຳ ເອົາເງິນມາ ບໍ່ເຄີຍມີເລີຍ ນີ້ແມ່ນຈຸດຢືນຂອງເດຟ ຂະນະທີ່ພຣະ ເຈົ້າກຳລັງແກ້ໄຂບັນຫາຂອງລາວຢູ່ນັ້ນລາວ ກໍ່ຊື່ນໃຈກັບຊີວິດໄດ້ ຂ້າພະເຈົ້າມັກຈະບອກ ເລື່ອງເຫຼົ່ານັ້ນກັບເດຟວ່າ "ຂ້ອຍຮູ້ແຕ່ ຂ້ອຍຕ້ອນການໃຫ້ເຈົ້າເຮັດບາງຢ່າງກັບບັນຫານີ້" ລາວຕອບວ່າ "ຕົກລົງ ຈອຍຊ໌ ເຈົ້າຕ້ອງການໃຫ້ຂ້ອຍເຮັດຫຍັງອີກ" ຂ້ອຍບອກ ວ່າ "ອະທິຖານແມ້" ລາວບອກວ່າ "ຂ້ອຍອະທິຖານແລ້ວ ບອກບັນ ຫາຂອງເຮົາໃຫ້ພຣະເຈົ້າແລ້ວ" .

"ຂ້ອຍບອກໃຫ້ພຣະອົງສຳແດງໃຫ້ຂ້ອຍຮູ້ວ່າມີຫຍັງທີ່ ຂາດຕົກບົກຜ່ອງທີ່ຕ້ອງເຮັດກໍ່ຂໍໃຫ້ພຣະເຈົ້າສຳແດງແດ່ ແຕ່ພຣະ ອົງພັດບໍ່ບອກຫຍັງ, ບໍ່ສຳແດງຫຍັງ ດັ່ງນັ້ນຂ້ອຍກໍ່ບໍ່ມີເຫດຜົນທີ່ ຕ້ອງທຸກຮ້ອນເລີຍ" ເມື່ອຟັງແນວນັ້ນສ່ວນເລິກຂອງຂ້າພະເຈົ້າ ກໍ່ ຮູ້ວ່າເດຟ ລາວເວົ້າຖືກ ແຕ່ຂ້າພະເຈົ້າກໍ່ມີຄວາມຄິດທີ່ບໍ່ຈະແຈ້ງ

ຢູ່ວ່າ ເມື່ອເຮົາມີບັນຫາແນວນີ້ຍັງຈະຊົມຊື່ນຍິນດີກັບພຣະເຈົ້າໄດ້ແນວໃດ ລາຍຮັບເຂົ້າມານັ້ນກໍ່ເກົ່າເປັນປີໆແລ້ວ ແຕ່ເມື່ອມີບັນຫາເດຟ ລາວອະທິຖານແລະຢືນຢັນຢູ່ໃນສັນຕິສຸກ ສ່ວນຂ້າພະເຈົ້າ ກໍ່ອະທິຖານດ້ວຍຄວາມກະວົນກະວາຍ ຂ້າພະເຈົ້າສ້າງທຸກໃຫ້ແກ່ຕົນເອງ ເດຟລາວຊື່ນຊົມຍິນດີກັບຊີວິດ ສ່ວນພຣະເຈົ້ານັ້ນມັກປະກົດຕອນສຸດທ້າຍ ແລ້ວພວກເຮົາກໍ່ສາມາດຜ່ານຜ່າທຸກຢ່າງໄດ້ ຂອບຄຸນພຣະເຈົ້າໃນທີ່ສຸດຂ້າພະເຈົ້າກໍ່ເຂົ້າໃຈ ຂ້າພະເຈົ້າບໍ່ປະສົບຄວາມສຳເລັດຫຍັງ ສິ່ງທີ່ຂ້າພະເຈົ້າເຮັດກໍ່ຄືສ້າງທຸກໃຫ້ແກ່ຕົນເອງ ແລະເປັນໂຕຂັດຂວາງຄຳຕອບທີ່ພຣະເຈົ້າຈະປະທານໃຫ້ ຕັ້ງແຕ່ນີ້ໄປຂ້າພະເຈົ້າຈະຊົມຊື່ນຍິນດີ ກັບຊີວິດໄດ້ໃນຂະນະທີ່ຊີວິດຍັງຢູ່ທ່າມກາງມໍລະສຸມ (ມາຣະໂກ4:37- 40)

ພຣະເຢຊູໄດ້ກ່າວໄວ້ກັບເຮົາວ່າ ໃນໂລກນີ້ທ່ານຈະປະສົບກັບຄວາມທຸກຍາກລຳບາກ ແຕ່ຈົ່ງຊື່ນໃຈເທາະ ເພາະຝ່າຍເຮົາຊະນະໂລກແລ້ວ (ໂຢຮັນ16:33) ພຣະຄຳພີບອກເຮົາຢ່າງຊັດເຈນວ່າການທົດລອງນັ້ນຈະມາ ແຕ່ເຮົາຈະບໍ່ໄດ້ຖືກບີບຄັ້ນໃຫ້ຢູ່ພາຍໃຕ້ການທົດລອງ (ລູກາ 3:13;1ໂກຣິນໂທ10:13, ຢາໂກໂບ 1:12) ສິ່ງທີ່ຂ້າພະເຈົ້າຢາກຈະຊີ້ໃຫ້ເຫັນກໍ່ຄື ການທົດລອງແລະສິ່ງຕ່າງໆ ທີ່ເຮົາຕ້ອງຊະນະ ສິ່ງເຫຼົ່ານີ້ເຮົາຕ້ອງປະເຊີນໜ້າໃນຂະນະທີ່ເຮົາມີຊີວິດຢູ່ໃນໂລກນີ້ ແຕ່ເຮົາມີໄຊຊະນະໂດຍພຣະຄຣິດ (ໂຣມ8:37)

ທ່ານຕ້ອງມາເຖິງຈຸດທີ່ ໂປໂລ ກ່າວໄວ້ໃນຟີລິບປອຍ 4:11- 12 ເພິ່ນກ່າວວ່າ ຈົ່ງຮຽນຮູ້ທີ່ຈະພໍໃຈ (ມີສັນຕິສຸກ) ໃນສະພາບການທີ່ທ່ານຢູ່ບໍ່ວ່າຈະທຸກຍາກຫຼື ຮັ່ງມີ ຖ້າບໍ່ດັ່ງນັ້ນແລ້ວທ່ານຈະລົ້ງເຄີຍກັບຄວາມຜິດຫວັງຊໍ້າແລ້ວຊໍ້າອີກ ຈົ່ງຈື່ໄວ້ວ່າ ຊາຕານຈະບັງຄັບນາບຄູ່ທ່ານໄດ້ຕາມສະຖານະການ ມັນຈະຄວບຄຸມທ່ານໄດ້ຕະຫຼອດ ຈົ່ງໃຊ້ສິດທິອຳນາດຂອງທ່ານເລີຍ ດ້ວຍການຍຶດສັນຕິສຸກໄວ້ໃຫ້ໝັ້ນ.

## One Day at a Time
## ມື້ລະກ້າວ

ແນ່ນອນທີ່ສຸດສັນຕິສຸກຈະສູນເສຍໄປກໍ່ໂດຍຄວາມກະວົນກະວາຍເຖິງມື້ອື່ນ ມັດທາຍ 6 : 34 ກ່າວວ່າ ຢ່າກະວົນກະວາຍເຖິງມື້ອື່ນ ເພາະມື້ອື່ນຈະມີຄວາມກະວົນກະວາຍໃນໂຕມັນເອງ ຄວາມທຸກໃນວັນໃດກໍ່ພໍແລ້ວສໍາລັບວັນນັ້ນ.

ເຮົາທຸກຄົນສ່ວນຫຼາຍມີເລື່ອງລາວທີ່ຕ້ອງປະເຊີນ (ຢ່າງພຽງພໍ) ໃນແຕ່ລະມື້ຢູ່ແລ້ວ ໂດຍບໍ່ຕ້ອງເອົາເລື່ອງຂອງມື້ອື່ນເຂົ້າມາພ້ອມ ພຣະເຈົ້າເອງໄດ້ປະທານພຣະຄຸນ ໃຫ້ແກ່ເຮົາຢ່າງພຽງພໍສໍາລັບມື້ນີ້ກ່ອນ ສໍາລັບພຣະຄຸນຂອງມື້ອື່ນຄ່ອຍວ່າກັນເມື່ອມື້ອື່ນມາເຖິງ.

ຫຼາຍຄົນມັກກະວົນກະວາຍເຖິງເລື່ອງໃດເລື່ອງໜຶ່ງຫຼາຍໂພດ ທັ້ງໆທີ່ຕໍ່ມາກໍ່ບໍ່ມີຫຍັງເກີດຂຶ້ນ ເຂົາມັກຈະໃຊ້ຄໍາວ່າ :ຖ້າເກີດບັນຫານີ້ຂຶ້ນ ເມື່ອໃດທີ່ທ່ານໄດ້ຍິນວ່າຖ້າເກີດບັນຫານັ້ນ ບັນຫານີ້ ຢູ່ໃນຄວາມຄິດຂອງທ່ານ ຈົ່ງລະວັງໄວ້ສາ ເພາະວ່າທ່ານອາດຈະກໍາລັງຈະພົບກັບຄວາມກະວົນກະວາຍກໍ່ໄດ້ ບາງຄົນມີຄວາມກະວົນກະວາຍຫຼາຍໂພດຈົນກາຍເປັນຄວາມຢ້ານ ຫຼາຍຄັ້ງທີ່ມະນຸດຢ້ານຫຍັງແລ້ວໃນທີ່ສຸດສິ່ງນັ້ນກໍ່ຈະມາຫາເຂົາ ເພາະເຮົາ ໄດ້ຮັບຈາກພຣະເຈົ້າໂດຍຄວາມເຊື່ອ ຂະນະດຽວກັນເຮົາກໍ່ຮັບຈາກຊາຕານໄດ້ດ້ວຍຄວາມຢ້ານ.

ຢ່າອະນຸຍາດໃຫ້ຕົວທ່ານຕ້ອງວຸ້ນວາຍກັບເລື່ອງຂອງມື້ອື່ນ ຈົ່ງຮູ້ວ່າພຣະເຈົ້ານັ້ນສັດຊື່ ແມ່ນຫຍັງກໍ່ຕາມທີ່ຈຳເປັນສຳລັບມື້ອື່ນ ພຣະອົງກໍ່ຈະຕຽມໃຫ້ພຣະຄຸນຂອງພຣະເຈົ້ານັ້ນ ພຽງພໍທີ່ຈະຕອບສະໜອງຕໍ່ທຸກຄວາມຕ້ອງການ ຢ່າໃຫ້ພຣະຄຸນສຳລັບມື້ນີ້ສູນເສຍໄປຍ້ອນຄວາມກະວົນກະວາຍເຖິງມື້ອື່ນ ມັນຈະເປັນສິ່ງທີ່ເປັນຕາອັດສະຈັນແລະເປັນຄວາມສຳເລັດຢ່າງຫຼວງຫຼາຍໃນການທີ່ທ່ານດຳເນີນໃນພຣະຄຸນຢ່າງພຽງພໍພາຍໃນແຕ່ລະມື້ນັ້ນ .

ຂ້າພະເຈົ້າໄດ້ຮັບບົດຮຽນນີ້ ເມື່ອຂ້າພະເຈົ້າເລີ່ມສອນທີ່ວິທະຍາໄລພຣະຄຣິສຕະທຳ ຂ້າພະເຈົ້າຕ້ອງສອນອາທິດລະ 1 ຄັ້ງ ຢູ່ທີ່ຄຣິສຕະຈັກແຖວບ້ານເຊິ່ງຂ້າພະເຈົ້າເປັນຮອງສິດຍາພິບານຢູ່ນັ້ນ ຂ້າພະເຈົ້າຕ້ອງເບິ່ງແຍງລູກ 4 ຄົນ ຕ້ອງເຮັດວຽກເຕັມເວລາ ເມື່ອມີໂອກາດສອນຢູ່ທີ່ວິທະຍາໄລເພີ່ມເປັນອາທິດລະ 3 ຄັ້ງ ແຕ່ກໍ່ເປັນຄວາມປາຖະໜາຂອງຕົນທີ່ຈະໄດ້ສອນຫຼາຍຂຶ້ນ ເພາະເມື່ອຂ້າພະເຈົ້າໄດ້ສອນນັ້ນ ກໍ່ໄດ້ຮຽນຮູ້ເພື່ອຕຽມບົດຮຽນພ້ອມ ຊັ້ນຮຽນໃນຫຼາຍຊັ້ນຕ້ອງຮຽນໃນເນື້ອຫາສາລະທີ່ເຈາະເລິກ ໃນພຣະຄຳພີນັ້ນກໍ່ໝາຍຄວາມວ່າ ຂ້າພະເຈົ້າຈະຕ້ອງຄົ້ນຄວ້າເບິ່ງຢ່າງເລິກເຊິ່ງໃນພຣະຄຳພີກ່ອນແລ້ວ ໂດຍສະເພາະຢ່າງຍິ່ງໃນຊ່ວງປີທຳອິດ ການຕຽມບົດຮຽນຂອງຂ້າພະເຈົ້າຕ້ອງໃຫ້ແລ້ວພາຍໃນຕອນແລງ ຂອງແຕ່ລະມື້ ເພາະວຽກຂອງຂ້າພະເຈົ້າເຮັດຕອນກາງເວັນ ເບິ່ງແລ້ວຄືວ່າຂ້າພະເຈົ້າເຮັດບໍ່ໄດ້ ແຕ່ຂ້າພະເຈົ້າຮູ້ສຶກວ່າພຣະເຈົ້າໃຫ້ເຮັດຫຼັງຈາກທີ່ໄດ້ອະທິຖານ

ແລະໃຊ້ເວລາຄິດຢ່າງຮອບຄອບແລ້ວຕົນເອງກໍ່ກ້າວອອກມາເຮັດໃນສິ່ງທີ່ຈຳເປັນຂັ້ນພື້ນຖານກ່ອນ ເມື່ອເຮັດແນວນັ້ນສິ່ງໜຶ່ງທີ່ປະທັບໃຈກໍ່ຄື ພຣະເຈົ້າຊ່ວຍຂ້າພະເຈົ້າແຕ່ລະມື້ໃຫ້ເຮັດໄດ້ສຳເລັດ ຖ້າຂ້າພະເຈົ້າກັງວົນເຖິງມື້ອື່ນຂ້າພະເຈົ້າເອງກໍ່ຈະພົບບັນຫາທັນທີ ແລະຈະພົບກັບຄວາມເປັນໄປບໍ່ໄດ້ເລີຍ ແຕ່ເມື່ອໃຫ້ທຸກຢ່າງຜ່ານໄປໃນແຕ່ລະມື້ນັ້ນກໍ່ມີຄວາມສຳເລັດຫຼາຍທີ່ສຸດ ພຣະເຈົ້າໄດ້ປະທານພຣະຄຸນໃຫ້ຂ້າພະເຈົ້າ ແຕ່ຈົນກວ່າພຣະຄຸນຂອງມື້ນັ້ນມາເຖິງ ໃນປີທີ່ 2 ກໍ່ງ່າຍຂຶ້ນ ເພາະຂ້າພະເຈົ້າມີບົດຮຽນຕຽມໄວ້ຮຽບຮ້ອຍແລ້ວ ດັ່ງນັ້ນຂ້າພະເຈົ້າຈຶ່ງບໍ່ຈຳເປັນຕ້ອງຕຽມຫຼາຍຄືກັບປີທຳອິດນັ້ນ ດ້ວຍເຫດຜົນ 2 ຂໍ້ທີ່ພຣະເຈົ້າໄດ້ໃຫ້ຂ້າພະເຈົ້າໄດ້ຮັບບົດຮຽນ ໃນການເຮັດສິ່ງນີ້ ນອກຈາກໄດ້ສອນນັກສຶກສາແລ້ວຄືຂໍ້ທີໜຶ່ງ:ພຣະເຈົ້າຕ້ອງການໃຫ້ຂ້າພະເຈົ້າໄດ້ຮັບປະສົບການວ່າ :ວຽກຈະສຳເລັດຫຼາຍສ່ຳໃດ ຖ້າເຮົາຮ່ວມມືກັບພຣະເຈົ້າໂດຍພຣະຄຸນຂອງພຣະອົງໃນແຕ່ລະມື້ ; ຂໍ້ທີສອງ : ພຣະເຈົ້າຕ້ອງການໃຫ້ຂ້າພະເຈົ້າໄດ້ມີປະສົບການ ທີ່ຈະສອນຫຼາຍຂຶ້ນດຽວນີ້ຂ້າພະເຈົ້າສອນຫຼາຍໆຄັ້ງເທົ່າກັບເດຟ ແລະຂ້າພະເຈົ້າໄດ້ເດີນທາງໄປສອນຮ່ວມກັນ ຈັດຕັ້ງການສອນຮ່ວມກັນໃນທີ່ປະຊຸມຢູ່ເຮືອນເລື້ອຍໆ ພຣະເຈົ້ານັ້ນດີເລີດແລະວິທີຂອງພຣະອົງນັ້ນໃຊ້ໄດ້ດີ.

ອີກຢ່າງໜຶ່ງທີ່ເຮັດໃຫ້ຄົນສ່ວນຫຼາຍສູນເສຍສັນຕິສຸກເລື້ອຍໆກໍ່ຄື : ການມົວແຕ່ເສຍໃຈກັບເລື່ອງຂອງມື້ວານນີ້ ມະນຸດເຮົາທຸກຄົນກໍ່ເຄີຍຜິດພາດ ແມ່ນແຕ່ບຸກຄົນທີ່ເຮົາຄິດວ່າຈະບໍ່ເປັນຕາມີຂໍ້

ຜິດພາດໃນຊີວິດຂອງເຂົາກໍ່ຜິດພາດ ພຣະຄໍາພີບອກວ່າທຸກຄົນຕ້ອງ ຮັບຜິດຊອບຂໍ້ຜິດພາດຂອງຕົນເອງ (ເອເຟໂຊ6:5) ຄົນເຮົາທຸກຄົນໄດ້ ເວົ້າຫຼືເຮັດຫຍັງບາງຢ່າງ ເຊິ່ງເປັນທີ່ໜ້າເສັຍດາຍໃນເວລາຕໍ່ມາ ວ່າບໍ່ ເປັນຕາເວົ້າຫຼືເຮັດເລີຍ ແມ່ນຫຍັງທີ່ມັນຜ່ານໄປແລ້ວກໍ່ຄືຜ່ານໄປ ຂ້າ ພະເຈົ້າໄດ້ຮຽນຮູ້ວ່າແທນທີ່ຈະເສຍໃຈກັບຂໍ້ຜິດພາດໃນອະດີດທີ່ແກ້ບໍ່ ໄດ້ເຫຼົ່ານັ້ນແລ້ວ ຄວນຈະເອົາກໍາລັງສ່ວນນັ້ນມາໄວ້ໃຈໃນພຣະເຈົ້າທີ່ ພຣະອົງຈະເຮັດໃຫ້ທຸກ ຢ່າງ ດີຂຶ້ນ ພຣະອົງຊົງມີຄວາມສາມາດ ດັ່ງ ນັ້ນຈຶ່ງຮູ້ໄວ້ເທາະວ່າ ພຣະອົງສາມາດທີ່ຈະຊໍາລະເຮົາໃຫ້ພົ້ນຈາກຂໍ້ ກ່າວຫາຈາກຄວາມຜິດພາດໃນອະດີດໄດ້ ບາງຄັ້ງຂ້າພະເຈົ້າເວົ້າຫຍັງ ບາງຢ່າງອອກໄປຢ່າງບໍ່ໜ້າຈະເວົ້າ ຫຼືບາງຄັ້ງກໍ່ເຮັດຫຍັງບາງຢ່າງ ເຊິ່ງມີຜົນກະທົບຕໍ່ໃຜບາງຄົນ ເຮັດໃຫ້ເຂົາໃຈຮ້າຍ ແທນທີ່ຂ້າພະ ເຈົ້າຈະກະວົນກະວາຍເຖິງເລື່ອງນັ້ນ ຂ້າພະເຈົ້າພັດອະທິຖານຕໍ່ພຣະ ເຈົ້າໃຫ້ ພຣະອົງເຮັດວຽກໃນໃຈຂອງເຂົາ ໃຫ້ເຂົາຮູ້ວ່າ ສ່ວນ ເລິກໃນໃຈ ຂອງຂ້າພະເຈົ້ານັ້ນບໍ່ໄດ້ຕັ້ງໃຈ ແມ່ນແຕ່ບາງຄັ້ງຂ້າພະ ເຈົ້າຕ້ອງ ຫ້າມປາກຂອງຕົນເອງ ທັງໄວ້ໃຈໃນພຣະເຈົ້າໃຫ້ພຣະ ອົງເຮັດວຽກໃນໃຈຂອງເຂົາ ໃຫ້ພຣະເຈົ້າປະທານຄວາມກະລຸນາ (ຄວາມໂປດປານ) ແກ່ຂ້າພະເຈົ້າ ເມື່ອເຮັດແນວນັ້ນຂ້າພະເຈົ້າຈຶ່ງບໍ່ ຕ້ອງໄດ້ເສຍເວລາເຖິງ 2 – 3 ມື້ ມີຊຸມແຫ່ງຄວາມໂສກເສົ້າຫຼາຍຊຸມ ທີ່ຖ້າດັກເຮົາໃຫ້ຕົກລົງ ເດຟກັບຂ້າພະເຈົ້າໄດ້ໄປກິນເຂົ້ານອກບ້ານ ເລື້ອຍໆ ເພາະບໍ່ຄ່ອຍມີເວລາຫຼາຍ ໂດຍປົກກະຕິແລ້ວເມື່ອເຮົາໄປ ກິນເຂົ້າບາງເທື່ອອາດຈະບໍ່ດີ, ການຕ້ອນຮັບບໍ່ຖືກໃຈ ເຮົາກໍ່ເສຍ

ໃຈຫຼາຍຊົ່ວໂມງ ແຕ່ໃນເວລາຕໍ່ມາພຣະເຈົ້າໄດ້ໃຫ້ບົດຮຽນ ແກ່ພວກເຮົາວ່າການເສຍໃຈກັບການຕັດສິນໃຈຜິດແບບນັ້ນກໍ່ເຮັດ ໃຫ້ສູນເສຍສັນຕິສຸກໄດ້ຄືກັນ.

ຈື່ໄດ້ບໍ່? ການຍຶດໝັ້ນໃນສັນຕິສຸກແມ່ນການຢຸດເຮັດບາງຢ່າງທີ່ບໍ່ໄດ້ຊ່ວຍແກ້ໄຂຫຍັງກັບສິ່ງທີ່ໄດ້ເປັນໄປແລ້ວ ທ່ານເຮັດທຸກຢ່າງທີ່ທ່ານຮູ້ວ່າຈຳເປັນຕ້ອງເຮັດ ແລ້ວທຸກຢ່າງຕ້ອງດີຂຶ້ນແນ່ນອນຄວາມ ເສຍໃຈກໍ່ຍັງບໍ່ໄດ້ເຮັດໃຫ້ຫຍັງດີຂຶ້ນມາ ຈົ່ງປ່ຽນສະຖານະການອັນນັ້ນໃຫ້ເປັນຜົນດີກັບເຮົາດີກວ່າ ໂດຍຄິດວ່າມີອີກຫຼາຍຄົນທີ່ຈະໄປຮ້ານນັ້ນ ເຊິ່ງເປັນຄວາມໂຊກຮ້າຍຍິ່ງສຳລັບພວກເຂົາ ສ່ວນພວກເຮົາໄດ້ຮັບພຣະພອນສໍ່າໃດທີ່ໄດ້ໄປມາແລ້ວ ໂດຍໄດ້ຮູ້ວ່າບໍ່ເປັນຕາໄປອີກ ບໍ່ຕ້ອງເສຍເວລາເສຍເງິນອີກ ຂ້າພະເຈົ້າມີຂໍ້ຄວາມຕິດເທິງຝາເຮືອນຂອງຂ້າພະເຈົ້າ ເຊິ່ງຂໍ້ຄວາມມີຢູ່ວ່າ **ຫາກວ່າທ່ານດຳເນີນຊີວິດໂດຍອະດີດ ກໍ່ຈະຍາກຫຼາຍ ເພາະພຣະເຢຊູບໍ່ໄດ້ກ່າວວ່າເຮົາເຄີຍເປັນ ຫາກວ່າທ່ານດຳເນີນຊີວິດໂດຍອະນາຄົດ ກໍ່ຈະຍາກອີກດ້ວຍ ບໍ່ໄດ້ກ່າວວ່າເຮົາຈະເປັນ ແຕ່ຫາກເຮົາດຳເນີນຊີວິດໂດຍແຕ່ລະມື້ ທຸກຢ່າງຈະເປັນໄປໄດ້ດີເພາະພຣະເຢຊູກ່າວວ່າເຮົາເປັນ** ພຣະອົງຊົງຢູ່ກັບທ່ານໃນທຸກສະຖານະການທີ່ທ່ານປະເຊີນຢູ່ ຈົ່ງໄວ້ວາງໃຈໃນພຣະເຈົ້າ ເພິ່ງພຣະຄຸນທີ່ພຽງພໍສຳລັບແຕ່ລະມື້.

# ການອະທິຖານນຳສັນຕິສຸກມາໃຫ້

ຟີລິບປອຍ 4:6 ,7 ກ່າວ່າ:

ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເລື່ອງຄວາມປາຖະໜາທຸກຢ່າງຂອງພວກເຈົ້າ ຕໍ່ພຣະເຈົ້າດ້ວຍການພາວັນນາອະທິຖານດ້ວຍການອ້ອນວອນທູນຂໍ ແລະດ້ວຍໃຈໂມທະນາຂອບພຣະຄຸນ.

ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າ ຊຶ່ງເກີນຄວາມເຂົ້າໃຈຈະເຝົ້າຮັກສາຈິດໃຈ ແລະຄວາມຄິດຂອງເຈົ້າທັງຫຼາຍ ໄວ້ໃນພຣະເຢຊູຄຣິດເຈົ້າ.

ສັນຕິສຸກທີ່ເກີນຄວາມເຂົ້າໃຈເປັນສິ່ງທີ່ດີທີ່ເຮົາຄວນຈະມີປະສົບການ ເຖິງແມ່ນວ່າເຮົາຈະຕົກໃນສະພາບວຸ້ນວາຍຮອບດ້ານ, ຍຸແຍ່ໃຫ້ເກີດຄວາມໃຈຮ້າຍ ແຕ່ຂະນະດຽວກັນເຮົາຍັງມີສັນຕິສຸກເຊິ່ງເກີນ ກວ່າທີ່ຈະອະທິບາຍໄດ້ຄອບຄອງໃຈເຮົາຢ່າງໝັ້ນຄົງ ນັ້ນແມ່ນປະສົບການອັນດີເລີດປະເສີດທີ່ຈະມີໄດ້ ໂລກໜ່ວຍນີ້ກຳລັງຫິວກະຫາຍສັນຕິສຸກແບບນີ້ຫຼາຍ ເຊິ່ງບໍ່ສາມາດຊື້ມາໄດ້ຍ້ອນບໍ່ມີຂາຍ ແຕ່ເປັນຂອງປະທານທີ່ພຣະເຢຊູຄຣິດໄດ້ມອບໃຫ້ໂດຍບໍ່ຄິດມູນຄ່າ ສັນຕິສຸກນີ້ຈະເປັນຂອງທ່ານໄດ້ເມື່ອທ່ານຕ້ອນຮັບພຣະອົງໄວ້ເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງທ່ານ ແລ້ວດຳເນີນຕາມຫຼັກການຂອງພຣະອົງ ການອະທິຖານຢ່າງຈິງຈັງມີ

ພະລັງອຳນາດຫຼາຍທີ່ຈະເຄື່ອນພາລະໜັກຂອງທ່ານເຖິງພຣະເຈົ້າ ໄດ້ ຕາມ 1ເປໂຕ 5:7 ກ່າວວ່າ : ຈົ່ງປະຄວາມກະວົນກະວາຍຂອງພວກເຈົ້າໄວ້ກັບພຣະອົງ ເພາະວ່າພຣະອົງຊົງຫວ່ງໃຍພວກເຈົ້າ ການແປຄວາມໝາຍຂອງພຣະຄຳພີຕອນນີ້ຄື : ຈົ່ງເອົາພາລະໜັກຂອງທ່ານ, ຄວາມກະວົນກະວາຍຂອງທ່ານ,ຄວາມທຸກໃຈ ນາໆປະການ ທັງໝົດນີ້ຍົກໃຫ້ພຣະອົງເຂົ້າມາຮັບແທນທ່ານ ເພາະວ່າພຣະອົງຊົງຍິນດີ ແລະພໍພຣະໄທທີ່ຈະຮັບໄວ້ເປັນຂອງພຣະອົງເພື່ອທ່ານ ພຣະພອນອັນປະເສີດຍິ່ງເຊັ່ນນີ້ຄຣິສຕຽນຫຼາຍໆຄົນບໍ່ຮູ້ທີ່ຈະໃຊ້ໃຫ້ເກີດປະໂຫຍດ ທັງໆທີ່ສິ່ງເຫຼົ່ານີ້ເປັນຂອງພວກເຂົາຢູ່ແລ້ວ ທ່ານເອງໄດ້ຊື່ນຊົມກັບສັນຕິສຸກທີ່ທ່ານໄດ້ຮັບ ເມື່ອທ່ານໄດ້ມອບພາລະທັງໝົດໄວ້ກັບພຣະອົງບໍ່? ຫາກທ່ານຍອມ ມອບພາລະຂອງທ່ານໄວ້ກັບພຣະເຈົ້າໄວເທົ່າໃດກໍ່ຈະດີເທົ່ານັ້ນ ເພື່ອປະໂຫຍດຂອງທ່ານເອງ ທ່ານຈະເຮັດໄດ້ໂດຍການອະທິຖານ ຈົ່ງມອບບັນຫາຂອງທ່ານໄວ້ໃຕ້ຄວາມຮັກຄວາມຫວ່ງຂອງພຣະເຈົ້າ ເຮັດຢ່າງໄວວາທັນທີເມື່ອທ່ານໄດ້ຮັບການດົນໃຈຈາກພຣະວິນຍານບໍລິສຸດ ຫຼືທັນທີເມື່ອທ່ານຂາດສັນຕິສຸກ .

ຊາຕານຕ້ອງການໃຫ້ທ່ານເກັບກົດຄວາມກັງວົນໄວ້ 1ເປໂຕ 5:9 ຈົ່ງຕໍ່ສູ້ກັບສັດຕູ ຈົ່ງຕໍ່ສູ້ທັນທີ ຢ່າປ່ອຍໃຫ້ມັນຫຼິ້ນເກມກັບທ່ານຈັກມື້ສອງມື້ກ່ອນແລ້ວຈຶ່ງຄ່ອຍຕໍ່ສູ້ ຫາກທ່ານຍິ່ງຄອຍຖ້າເກມກໍ່ຍິ່ງດຸເດືອດຂຶ້ນເລື້ອຍໆ ຈົ່ງຢ່າຖ້າເລີຍເພື່ອທ່ານຈະບໍ່ເປັນ

ຝ່າຍເສຍປຽບ ທັນທີທີ່ທ່ານຮູ້ສຶກວ່າທ່ານກຳລັງສູນເສຍສັນຕິສຸກ ເມື່ອເລີ່ມກະວົນກະວາຍກໍ່ຈົ່ງເຮັດໜ້າທີ່ຂອງທ່ານໃນວິນາທີນັ້ນ ເລີຍໂດຍມອບພາລະໄວ້ກັບພຣະເຈົ້າແລ້ວປ່ຽນຄວາມຄິດຂອງ ທ່ານທັນທີ.

ເມື່ອເລີ່ມຕົ້ນທີ່ຂ້າພະເຈົ້າໄດ້ຮຽນຮູ້ກ່ຽວກັບການມອບ ພາລະໄວ້ໂດຍບໍ່ຕ້ອງກະວົນກະວາຍອີກ ຂ້າພະເຈົ້າຮູ້ເລີຍວ່າ ຄວາມຄິດຂອງຕົນກຳລັງຜິດ ເພາະໃຊ້ເວລາໝົດມື້ ພະຍາຍາມ ໂຍນຄວາມຜິດຖິ້ມ ແລ້ວຄວາມຄິດນັ້ນກໍ່ຍ້ອນກັບມາທັນທີ ເປັນ ຕາເຫຼືອໃຈແທ້ ຂ້າພະເຈົ້າບອກກັບພຣະເຈົ້າວ່າເປັນໄປໄດ້ແນວ ໃດ ທີ່ມະນຸດເຮົາຈະບໍ່ຄິດຫຍັງຈັງດີ້ເລີຍ ເຫັນບໍ່ວ່າການທີ່ຈະບໍ່ມີ ຄວາມກັງວົນກໍ່ຄືຈະຕ້ອງບໍ່ຄິດຮອດບັນຫາ ແຕ່ເມື່ອຕອນທີ່ຈະ ຕ້ອງຄິດກໍ່ຄືຄິດເພື່ອຫາຂໍ້ຍຸຕິ ທ່ານຈະຄິດກໍ່ໄດ້ ແຕ່ຄິດໃນແງ່ ບວກບໍ່ແມ່ນແງ່ລົບ ທ່ານສາມາດທີ່ຈະຈິງຈັງກັບບັນຫາຂອງທ່ານ ແຕ່ບໍ່ແມ່ນຢູ່ໃນແງ່ລົບກໍ່ໄດ້.

ຂ້າພະເຈົ້າຍັງງົງໆຢູ່ ຈື່ໄດ້ບໍ່? ໃນຄຳຖາມທີ່ຂ້າພະເຈົ້າ ຖາມພຣະເຈົ້າວ່າ ຈະເປັນໄປໄດ້ແນວໃດ ທີ່ມະນຸດຈະບໍ່ຄິດຫຍັງ ເລີຍ ພຣະເຈົ້າກໍ່ຕອບຂ້າພະເຈົ້າງ່າຍຫຼາຍ ວ່າ : “ຈອຍຊ໌ ກໍ່ຄິດສິ່ງ ອື່ນສາ” ເຫັນບໍ່ທ່ານບໍ່ຕ້ອງຄິດເຖິງບັນຫາ ແຕ່ຄິດເຖິງສິ່ງທີ່ບໍ່ແມ່ນ ບັນຫາ ຖ້າຫາກວ່າທ່ານຍອມໃຊ້ຄວາມຄິດໃນສິ່ງທີ່ບໍ່ແມ່ນບັນຫາ ຄວາມຄິດຂອງທ່ານກໍ່ຈະບໍ່ມາເຖິງບັນຫາ ຟີລິບປອຍ 4 : 6 ກ່າວ

ວ່າ ຢ່າທຸກຮ້ອນ ແຕ່ຈົ່ງອະທິຖານດີກວ່າ ຂໍ້ທີ 7 ສັນຍາກັບເຮົາວ່າ ຖ້າເຮົາເຮັດຂໍ້ທີ່ 6 ເຮົາກໍ່ຈະໄດ້ຮັບສັນຕິສຸກຊຶ່ງເກີນຄວາມເຂົ້າໃຈ ຂໍ້ທີ 8 ກ່າວໄວ້ວ່າ :

ພີ່ນ້ອງທັງຫຼາຍເອີ້ຍ ໃນທີ່ສຸດນີ້ ສິ່ງໃດທີ່ສັດຈິງ ສິ່ງໃດທີ່ໜ້ານັບຖື ສິ່ງໃດທີ່ຍຸດຕິທຳ ສິ່ງໃດທີ່ບໍລິສຸດ ສິ່ງໃດທີ່ໜ້າຮັກ ສິ່ງໃດທີ່ໜ້າຍິນດີ ສິ່ງໃດທີ່ລ້ຳເລີດ ແລະສິ່ງໃດທີ່ຄວນແກ່ການສັນລະເສີນ ກໍ່ຈົ່ງພິຈາລະນາເຖິງສິ່ງເຫຼົ່ານັ້ນ.

ຂ້າພະເຈົ້າອະທິຖານວ່າພຣະເຈົ້າຈະປະທານພຣະຄຸນເຊິ່ງເປັນຣິດແຫ່ງພຣະວິນຍານບໍລິສຸດ ໃຫ້ທ່ານນຳເອົາຫຼັກການເຫຼົ່ານີ້ ເອົາມາໃຊ້ໃຫ້ເປັນປະໂຫຍດເພື່ອທ່ານຈະໄດ້ຊື່ນຊົມກັບສັນຕິສຸກແຫ່ງຊີວິດ ຂະນະດຽວກັນຂ້າພະເຈົ້າອະທິຖານວ່າ ພຣະເຈົ້າພຣະບິດາໂຜດໃຊ້ຊີວິດຂອງທ່ານເພື່ອພຣະກຽດແລະພຣະສິຣິຂອງພຣະອົງ.

## ສຳຜັດຊີວິດໃໝ່

ຖ້າຫາກວ່າທ່ານຍັງບໍ່ເຄີຍຍອມຮັບພຣະເຢຊູຄຣິດເຈົ້າເຂົ້າມາເປັນພຣະເຈົ້າແລະພຣະຜູ້ຊ່ວຍໃຫ້ພົ້ນຂອງທ່ານມາກ່ອນ ຂ້າພະເຈົ້າປາຖະໜາຢາກເຊີນທ່ານໃຫ້ອະທິຖານຕາມຄຳອະທິຖານນີ້ ຖ້າວ່າທ່ານອະທິຖານດ້ວຍຄວາມຈິງໃຈ ທ່ານກໍ່ຈະພົບກັບປະສົບການຊີວິດໃໝ່ໃນພຣະຄຣິດໄດ້.

ພຣະບິດາເຈົ້າ ຂ້ານ້ອຍເຊື່ອວ່າພຣະເຢຊູຄຣິດເຈົ້າຊົງເປັນພຣະບຸດຂອງພຣະອົງ ຊົງເປັນພຣະຜູ້ຊ່ວຍຂອງໂລກ ຂ້ານ້ອຍເຊື່ອວ່າພຣະອົງຊົງສິ້ນພຣະຊົນເທິງໄມ້ກາງແຂນ ເພື່ອຂ້ານ້ອຍ ພຣະອົງຊົງໄຖ່ບາບທັງໝົດຂອງຂ້ານ້ອຍ ພຣະອົງຊົງຊື້ຂ້ານ້ອຍຄືນມາຈາກຄວາມບາບ ພຣະອົງໄດ້ຊົງຍອມທົນທຸກແທນຂ້ານ້ອຍ ຂ້ານ້ອຍເຊື່ອວ່າພຣະເຢຊູຄຣິດເຈົ້າໄດ້ຊົງເປັນຄືນມາຈາກຄວາມຕາຍ ແລະສະຖິດຢູ່ທີ່ເບື້ອງຂວາມືຂອງພຣະບິດາ ຂ້ານ້ອຍຕ້ອງການພຣະອົງຮັບຂ້ານ້ອຍໄວ້ ຂໍພຣະອົງມາສະຖິດຢູ່ພາຍໃນຂ້ານ້ອຍ ຂ້ານ້ອຍຕ້ອງການບັງເກີດໃໝ່.

ບາດນີ້ຂໍໃຫ້ທ່ານເຊື່ອເທາະວ່າພຣະເຢຊູຄຣິດຊົງສະຖິດໃນໃຈຂອງທ່ານ ແລະທ່ານໄດ້ຮັບການອະໄພບາບແລະຖືກເຮັດໃຫ້ເປັນຜູ້ຊອບທຳແລ້ວ ແລະພຣະອົງຈະຄອຍຖ້າຕ້ອນຮັບທ່ານຢູ່ໃນສະຫວັນ.

ຫຼັງຈາກນີ້ຂໍໃຫ້ທ່ານໄປຄຣິສຕະຈັກທີ່ສາມາດສອນພຣະຄໍາໃຫ້ແກ່ທ່ານ ເພື່ອທ່ານຈະເຕີບໃຫຍ່ຂຶ້ນໃນພຣະເຢຊູຄຣິດ ຈະບໍ່ມີຫຍັງປ່ຽນແປງໃນຊີວິດຂອງທ່ານນອກເໜືອຈາກຄວາມເຂົ້າໃຈໃນພຣະຄໍາຂອງພຣະເຈົ້າ ໂຢຮັນ 8 : 31, 32 ກ່າວວ່າ : ຖ້າພວກເຈົ້າຕັ້ງໝັ້ນຢູ່ໃນຖ້ອຍຄໍາຂອງເຮົາ ພວກເຈົ້າກໍ່ເປັນສາວົກແທ້ຂອງເຮົາ ແລ້ວພວກເຈົ້າຈະຮູ້ຈັກຄວາມຈິງແລະຄວາມຈິງນັ້ນຈະເຮັດໃຫ້ພວກເຈົ້າເປັນອິດສະຫຼະທ່ານຈິ່ງຂຽນມາຫາຂ້າພະເຈົ້າແລະໃຫ້ຂ້າພະເຈົ້າໄດ້ຮູ້ນໍາວ່າທ່ານໄດ້ຕ້ອນຮັບພຣະເຢຊູຄຣິດແລະຕ້ອງການໜັງສືຝ "ເລື່ອງເລີ່ມຕົ້ນໃໝ່ຊີວິດໃນພຣະຄຣິດ"

ພວກເຮົາມີທີມງານຂອງ ຊີວິດໃນພຣະຄໍາ ທຸກຄົນຮັກທ່ານ ພວກເຮົາອະທິຖານເພື່ອທ່ານໃຫ້ໄດ້ຮັບພຣະພອນຈາກປື້ມເຫຼັ້ມນີ້ "ສັນຕິສຸກ" .

**ທ່ານທີ່ຮັກ**

ໂຢຮັນ 8 : 31 ,32 ກ່າວວ່າ : ຖ້າພວກເຈົ້າຕັ້ງໝັ້ນຢູ່ໃນຖ້ອຍຄຳຂອງເຮົາ ພວກເຈົ້າກໍ່ເປັນສາວົກແທ້ຂອງເຮົາ ແລ້ວພວກເຈົ້າຈະຮູ້ຈັກຄວາມຈິງແລະຄວາມຈິງນັ້ນຈະເຮັດໃຫ້ພວກເຈົ້າເປັນອິດສະຫຼະ .

ຂ້າພະເຈົ້າຂໍໜູນໃຈໃຫ້ທ່ານຍຶດໝັ້ນໃນພຣະຄຳຂອງພຣະເຈົ້າໃຫ້ຝັງເລິກລົງໄປໃນໃຈຂອງທ່ານ ຕາມທີ່ກ່າວໄວ້ ໃນ 2 ໂກຣິນໂທ 3 :18 ຂະນະທີ່ທ່ານແນມເບິ່ງໃນພຣະຄຳຂອງພຣະເຈົ້າ ທ່ານເອງກໍ່ຈະໄດ້ປ່ຽນໄປເປັນເໝືອນພຣະສະຫງ່າຣາສີຂອງອົງພຣະເຢຊູຄຣິດເຈົ້າ .

ດ້ວຍຄວາມຮັກ

ຈາກ

**ຈອຍຊ໌**

# ປະຫວັດຜູ້ຂຽນ

ຈອຍຊ໌ ໄມເອີຣ໌ ໄດ້ສອນພຣະຄຳຂອງພຣະເຈົ້າຕັ້ງແຕ່ປີ 1976 ແລະໄດ້ຮັບໃຊ້ເຕັມເວລາຕັ້ງແຕ່ປີ 1980 ໃນຕຳແໜ່ງຮອງສິດຍາພິບານ ຂອງ Life Christian Center ໃນເມືອງ St.Lovis, Missouri ເພິ່ນໄດ້ເລີ່ມໂປແກມສອນປະຈຳອາທິດທີ່ຮູ້ກັນ ໂດຍຊື່ວ່າ Life In The Word ຫຼັງຈາກນັ້ນດົນກວ່າ 5 ປີ ພຣະເຈົ້າໄດ້ຊົງນຳເພິ່ນ ທີ່ຈະເລີ່ມໜ່ວຍງານຮັບໃຊ້ພຣະເຈົ້າເປັນຂອງເພິ່ນເອງຊື່ວ່າ : “Life In The Word, inc.”

ໃນຫົວຂໍ້ Joyce’s Life In The Word ໄດ້ຜະລິດລາຍການວິທະຍຸ ແລະລາຍການໂທລະພາບ ເຊິ່ງມີຄົນຮັບຊົມຮັບຟັງທົ່ວໂລກ ມ້ວນເທັບໄດ້ຮັບຄວາມນິຍົມ ເພິ່ນໄດ້ເດີນທາງໄປປະຊຸມສຳມະນາທົ່ວໄປ .

ຈອຍຊ໌ແລະຜົວຂອງເພິ່ນເຮັດວຽກໃນຝ່າຍທຸລະການຂອງ Life In The Word ເພິ່ນທັງ 2 ໄດ້ແຕ່ງງານກັນດົນກວ່າ 33 ປີ ເຊິ່ງມີລູກ 4 ຄົນ ; ລູກທັງ 4 ຄົນກໍ່ແຕ່ງງານໝົດແລ້ວ ແລະທຸກ

ຄົນລວມທັງຄູ່ຂອງພວກເຂົາແຕ່ລະຄົນກໍ່ຮ່ວມເຮັດວຽກກັບການຮັບໃຊ້ຂອງ ຈອຍຊ໌ ກັບ ເດຟ ອີກດ້ວຍ .

ຈອຍຊ໌ໄດ້ເຊື່ອໃນການຊົງເອີ້ນຂອງພຣະເຈົ້າ ໃນຊີວິດຂອງເພິ່ນວ່າ ພຣະເຈົ້າໄດ້ໃຫ້ເພິ່ນເສີມສ້າງຊີວິດຂອງຜູ້ເຊື່ອໃນພຣະຄໍາຂອງພຣະເຈົ້າ ເພິ່ນໄດ້ເວົ້າວ່າພຣະເຢຊູຄຣິດໄດ້ຊົງສິ້ນພຣະຊົນເພື່ອປົດປ່ອຍຜູ້ຖືກບີບບັງຄັບ ໃຫ້ເປັນອິດສະຫຼະແຕ່ຄຣິສຕຽນພັດບໍ່ໄດ້ຮັບໄຊຊະນະໃນການດໍາເນີນຊີວິດແຕ່ລະວັນເລີຍ ເພິ່ນກໍ່ໄດ້ພົບຕົນເອງ ຢູ່ໃນສະພາບເຊັ່ນນັ້ນນໍາ ດົນຫຼາຍປີ ເຊິ່ງຕໍ່ມາເພິ່ນກໍ່ໄດ້ປະສົບໄຊຊະນະ ໂດຍການເອົາພຣະຄໍາເຂົ້າມາໃຊ້ໃນຊີວິດ ຈອຍຊ໌ໄດ້ຮັບການບັນຊາໃຫ້ປົດປ່ອຍຜູ້ຖືກບີບບັງໃຫ້ເປັນອິດສະຫຼະ ຈອຍຊ໌ເຊື່ອວ່າຜູ້ທີ່ດໍາເນີນໃນໄຊຊະນະແລ້ວສາມາດຈະນໍາຄົນອື່ນອີກຫຼາຍໆຄົນ ໃຫ້ມີໄຊຊະນະດ້ວຍ ຊີວິດຂອງເພິ່ນໄດ້ຮັບການປ່ຽນແປງແລະຄໍາສອນຂອງເພິ່ນກໍ່ງ່າຍຕໍ່ການເອົາໄປປະຕິບັດໃນຊີວິດປະຈໍາວັນ ເພິ່ນໄດ້ສອນໃນເລື່ອງການບໍາບັດພາຍໃນ ເປັນວິຊາທີ່ໄດ້ສອນກັນໃນທີ່ປະຊຸມສໍາມະນາທົ່ວປະເທດ ໄດ້ເຫັນຜົນເພີ່ມທະວີ ເພິ່ນໄດ້ບັນທຶກເທັບກວ່າ 200 ມ້ວນໃນຫົວຂໍ້ທີ່ແຕກຕ່າງກັນໄປ ແລະເພິ່ນໄດ້ຂຽນປຶ້ມ 35 ເຫຼັ້ມ ເປັນພຣະພອນຊີ້ນໍາແກ່ຄຣິສຕຽນ.

ໃນຫົວຂໍ້ການບໍາບັດພາຍໃນ ໄດ້ບັນທຶກລວມໄວ້ຫຼາຍກວ່າ 23 ຊົ່ວໂມງ ເຊິ່ງເປັນເນື້ອຫາຂອງວິຊານີ້ ເພື່ອທີ່ຈະບໍາ

ບັດປິ່ນປົວຄວາມເຈັບຊ້ຳໃຈ, ຄວາມຂົມຂື່ນ, ຄວາມຜິດຫວັງ, ການບໍ່ຍົກໂທດ, ຮາກແຫ່ງການຖືກປະຕິເສດ ແລະໃນເວລາ 90 ນາທີ ເປັນຂໍ້ພຣະຄຳພີ / ດົນຕີ ໃນຫົວຂໍ້ບຳບັດປິ່ນປົວບາດແຜໃຈທີ່ເຈັບຊ້ຳ .

ໃນຫົວຂໍ້ Joyce's mind Package ມີ 5 ມ້ວນ ເນື້ອຫາເວົ້າເຖິງປ້ອມປະການໃນຄວາມຄິດ, ຈຸດຢືນຂອງຄວາມຄິດ, ຄວາມຄິດທີ່ກັນດານ, ຄວາມຄິດທີ່ປັກຢູ່ກັບເນື້ອໜັງ, ຄວາມຄິດທີ່ເປື້ອນເປິ, ຄວາມຄິດທີ່ງຶມງວາຍ,ຄວາມຄິດແລະທ່າທີ ທີ່ຊຶມເສົ້າ ລວມໄປທັງຫົວຂໍ້ຄວາມຍິນດີເປັນພະລັງ ແລະປຶ້ມຊື່ ສະໜາມຮົບໃນຄວາມຄິດ ຈຳນວນ 288 ໜ້າ.

ໃນຫົວຂໍ້ຂອງຄວາມຮັກໄດ້ບັນທຶກໄວ້ມີເທັບ 3 ມ້ວນ ເນື້ອໃນຂອງວິຊາປະກອບດ້ວຍ "ຮັກຄື..." ຮັກເປັນແຫຼ່ງພະລັງ ຮັກພຣະເຈົ້າ ຮັກຕົນເອງ ...ຮັກຄົນອື່ນ ...

ຊຽນມາຕິດຕໍ່ກັບສຳນັກງານຂອງຈອຍຊ໌ ໄມເອີຣ໌  ໄດ້ທີ່


Joyce Meyer Ministries

P.O. Box 655

Fenton, Missouri 63025

U.S.A

Call : (636) 349-0303

Internet Address : WWW.jmministries.org

ຂ້າພະເຈົ້າດຳເນີນຊີວິດໃນຄວາມສັບສົນວຸ້ນວາຍ ແລະຜິດຫວັງມາຫຼາຍປີ ແລະເບິ່ງຄືວ່າ ຂ້າພະເຈົ້າຜິດຫວັງນຳບາງສິ່ງບາງຢ່າງຢູ່ເລື້ອຍໆ ຂ້າພະເຈົ້າໄດ້ຮັບບົດຮຽນຈາກພຣະຄຳຂອງພຣະເຈົ້າທີ່ຈະດຳເນີນຊີວິດຢ່າງສະຫງົບສຸກ ແລະປະສົບການກໍ່ໄດ້ສອນຂ້າພະເຈົ້າ



ວ່າ: ການດຳເນີນຊີວິດດ້ວຍຄວາມສັບສົນວຸ້ນວາຍນັ້ນເສຍເວລາ ແລະບໍ່ມີປະໂຫຍດຫຍັງ ມັນມີແຕ່ສ້າງບັນຫາໃຫ້ເຮົາເທົ່ານັ້ນ ສັນຕິສຸກເປັນຜູ້ຊີ້ນຳໃນຊີວິດຂອງເຮົາ ຈົ່ງຕິດຕາມການນຳພາຂອງສັນຕິສຸກ ແລ້ວທ່ານຈະຊື່ນຊົມກັບຊີວິດ ພຣະເຢຊູໄດ້ຝາກສັນຕິສຸກພິເສດຂອງພຣະອົງເອງໄວ້ກັບເຮົາ ສັນຕິສຸກນັ້ນເປັນຫຼັກໝັ້ນເຖິງແມ່ນວ່າໃນທ່າມກາງມໍລະສຸມຂອງບັນຫາ.

ຂ້າພະເຈົ້າມີຄວາມປາຖະໜາທີ່ຈະໃຫ້ທ່ານໃຊ້ຊີວິດໃນສັນຕິສຸກ ຈົ່ງຈື່ໄວ້ສະເໝີວ່າ : ໃນອານາຈັກຂອງພຣະເຈົ້າ ບໍ່ແມ່ນເລື່ອງການກິນແລະການດື່ມ ແຕ່ແມ່ນເລື່ອງຄວາມຊອບທຳ, ສັນຕິສຸກແລະຄວາມຊົມຊື່ນຍິນດີ ທີ່ມາຈາກພຣະວິນຍານບໍລິສຸດ .

ໂຣມ 14:17

JOYCE MEYER
ministries